ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 005 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 5 ມັງກອນ 2024

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການຕິດຕາມກວດກາ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 105/ສພຊ, ລົງວັນທີ 20 ພະຈິກ 2023 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 35/ຄປຈ, ລົງວັນທີ 20 ທັນວາ 2023.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ທອງລຸນ ສີສຸລິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ**

ເລກທີ 105 / **ສພຊ**

ນະຄອນຫຼວງວຽງຈັນ, ວັນທີ 20 / 11 / 23

# ມະຕິ
## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ)

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ໃນວາລະຕອນບ່າຍຂອງກອງປະຊຸມ ຄັ້ງວັນທີ 14 ພະຈິກ 2023 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນບ່າຍຂອງກອງປະຊຸມ ຄັ້ງວັນທີ 20 ພະຈິກ 2023.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 47 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 20 ພະຈິກ 2023

# ກົດໝາຍ
# ວ່າດ້ວຍການຕິດຕາມກວດກາ
# ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 (ປັບປຸງ) ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ, ມາດຕະການ ແລະ ວິທີການ ກ່ຽວກັບການຕິດຕາມກວດກາ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອໃຫ້ວຽກງານຕິດຕາມກວດການັ້ນ ມີປະສິດທິພາບ, ປະສິດທິຜົນ, ເຮັດໃຫ້ບັນດາອົງການລັດ ເຄົາລົບ ແລະ ຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຢ່າງຖືກຕ້ອງ ແລະ ເຂັ້ມງວດ ແນໃສ່ສະກັດກັ້ນ ແລະ ຕ້ານ ການລະເມີດກົດໝາຍ, ແກ້ໄຂປາກົດການຫຍໍ້ທໍ້ໃນສັງຄົມ ຮັບປະກັນໃຫ້ລະບົບການເມືອງ ມີສະຖຽນລະພາບ, ປະເທດຊາດມີຄວາມໝັ້ນຄົງ, ເສດຖະກິດ-ສັງຄົມ ມີການຂະຫຍາຍຕົວ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

### ມາດຕາ 2 (ປັບປຸງ) ການຕິດຕາມກວດກາ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ

ການຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແມ່ນ ການເຄື່ອນໄຫວ ເກັບກຳສະພາບ, ຂໍ້ມູນ ແລະ ຕີລາຄາການນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ ຂອງບັນດາອົງການລັດ ແລະ ບຸກຄະລາກອນ ໃຫ້ຖືກຕ້ອງ, ສອດຄ່ອງກັບ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ພ້ອມທັງສະເໜີໃຫ້ອົງການທີ່ກ່ຽວຂ້ອງ ມີວິທີການ ແລະ ມາດຕະການແກ້ໄຂຜົນການຕິດຕາມກວດກາ.

ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການຕິດຕາມ** ໝາຍເຖິງ ການເຄື່ອນໄຫວ ຊອກຮູ້, ສັງເກດ, ເກັບກຳສະພາບ ກ່ຽວກັບການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ;

2. **ການກວດກາ** ໝາຍເຖິງ ການເຄື່ອນໄຫວ ເກັບກຳຂໍ້ມູນ ແລະ ຕີລາຄາ ກ່ຽວກັບການເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ;

3. **ເປົ້າໝາຍຖືກຕິດຕາມກວດກາ** ໝາຍເຖິງ ການຈັດຕັ້ງ ແລະ ບຸກຄະລາກອນ ທີ່ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສ້າງຕັ້ງ, ເລືອກຕັ້ງ ແລະ ຮັບຮອງເອົາການສະເໜີແຕ່ງຕັ້ງ;

4. **ນິຕິກຳໃຕ້ກົດໝາຍ** ໝາຍເຖິງ ມະຕິກອງປະຊຸມສະພາແຫ່ງຊາດ, ມະຕິຄະນະປະຈຳສະພາແຫ່ງຊາດ, ລັດຖະບັນຍັດຂອງປະທານປະເທດ, ດຳລັດຂອງລັດຖະບານ, ມະຕິກອງປະຊຸມລັດຖະບານ, ຂໍ້ຕົກລົງ, ຄຳສັ່ງຂອງ ນາຍົກລັດຖະມົນຕີ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ຂອງລັດຖະມົນຕີ, ຫົວໜ້າອົງການລັດ, ມະຕິກອງປະຊຸມສະພາ ປະຊາຊົນຂັ້ນແຂວງ, ມະຕິຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ຂອງເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແລະ ກົດ ລະບຽບຂອງບ້ານ;

5. **ການຊັກຖາມ** ໝາຍເຖິງ ການຖາມ, ການຕັ້ງບັນຫາທີ່ ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາ ປະຊາຊົນຂັ້ນແຂວງ ມີຄວາມສົນໃຈ ເພື່ອໃຫ້ເປົ້າໝາຍຖືກຕິດຕາມກວດກາຊີ້ແຈງ;

6. **ການຊີ້ແຈງ** ໝາຍເຖິງ ການຕອບ, ໃຫ້ຄວາມກະຈ່າງແຈ້ງ ຂອງເປົ້າໝາຍຖືກຕິດຕາມກວດກາ ຕໍ່ບັນຫາ ໃດໜຶ່ງທີ່ ຄະນະປະຈຳສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ສະມາ ຊິກສະພາປະຊາຊົນຂັ້ນແຂວງ ຊັກຖາມ.

ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານຕິດຕາມກວດກາ

ລັດ ໃຫ້ຄວາມສຳຄັນຕໍ່ການເຄື່ອນໄຫວວຽກງານຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາ ຊົນຂັ້ນແຂວງ ດ້ວຍການເຊີດຊູບົດບາດຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ສູງຂຶ້ນ.

ລັດ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານຕິດຕາມກວດກາຂອງ ສະພາແຫ່ງ ຊາດ ແລະ ສະພາປະຊາຊົນຂັ້ນແຂວງ ດ້ວຍການສະໜອງ ງົບປະມານ, ພາຫະນະ, ວັດຖຸປະກອນ ເຂົ້າໃນການຈັດຕັ້ງ ແລະ ເຄື່ອນໄຫວວຽກງານດັ່ງກ່າວ.

ລັດ ຊຸກຍູ້ບັນດາອົງການລັດ ເພີ່ມທະວີ ການພົວພັນ, ຮ່ວມມື ໃນການເຄື່ອນໄຫວວຽກງານ ຕິດຕາມກວດກາ ຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອໃຫ້ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສາ ມາດປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

ລັດ ປຸກລະດົມ ແລະ ສ້າງເງື່ອນໄຂ ໃຫ້ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາ ຊົນ, ອົງການຈັດຕັ້ງສັງຄົມ, ປະຊາຊົນລາວບັນດາເຜົ່າ ແລະ ຊັ້ນຄົນຕ່າງໆ ປະກອບສ່ວນ ແລະ ເຂົ້າຮ່ວມໃນການ ເຄື່ອນໄຫວວຽກງານ ຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານຕິດຕາມກວດກາ**

ໃນການເຄື່ອນໄຫວວຽກງານຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມ ລັດຖະທຳມະນູນ ແລະ ກົດໝາຍ ຢ່າງເຂັ້ມງວດ;
2. ມີປະຊາທິປະໄຕ, ພາວະວິໄສ ແລະ ມີຄວາມໂປ່ງໃສ;
3. ມີຄວາມຊັດເຈນ, ຍຸຕິທຳ, ທັນເວລາ ແລະ ເປີດເຜີຍ;
4. ມີສ່ວນຮ່ວມຂອງປະຊາຊົນ, ການຈັດຕັ້ງທຸກຂັ້ນ, ສື່ມວນຊົນ ແລະ ທຸກພາກສ່ວນຂອງສັງຄົມ;
5. ບໍ່ສ້າງຄວາມຫຍຸ້ງຍາກທີ່ບໍ່ຈຳເປັນ ໃຫ້ແກ່ການເຄື່ອນໄຫວວຽກງານຂອງ ເປົ້າໝາຍຖືກຕິດຕາມກວດກາ.

**ມາດຕາ 6 (ໃໝ່) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ ສຳລັບການຕິດຕາມກວດກາຂອງ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ເປົ້າໝາຍຖືກຕິດຕາມກວດກາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 7 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ຮ່ວມມື ກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ປະສົບການ, ຝຶກອົບຮົມ, ຍົກລະດັບຄວາມຮູ້, ຄວາມສາມາດດ້ານວິຊາການ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ, ປະສິດທິຜົນ ແລະ ທັນສະໄໝ.

## ພາກທີ II
## ປະເພດ ແລະ ຄວາມຮັບຜິດຊອບໃນການຕິດຕາມກວດກາ

**ມາດຕາ 8 (ປັບປຸງ) ປະເພດການຕິດຕາມກວດກາ**

ການຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ມີ ສີ່ປະເພດ ດັ່ງນີ້:

1. ການຕິດຕາມກວດກາທົ່ວໄປ;
2. ການຕິດຕາມກວດການິຕິກຳ;
3. ການຕິດຕາມກວດກາການແກ້ໄຂຄຳຮ້ອງທຸກ;
4. ການຕິດຕາມກວດກາສະເພາະ.

**ມາດຕາ 9 (ໃໝ່) ການຕິດຕາມກວດກາທົ່ວໄປ**

ການຕິດຕາມກວດກາທົ່ວໄປ ແມ່ນ ການຕິດຕາມກວດກາປົກກະຕິຕໍ່ການເຄື່ອນໄຫວວຽກງານຂອງອົງການລັດໃນການ ເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ, ມະຕິຄະນະປະຈຳສະພາແຫ່ງຊາດ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ໂຄງການຂອງລັດຖະບານ, ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ, ມະຕິຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ຂັ້ນແຂວງ, ໂຄງການລົງທຶນຂອງລັດທີ່ຂັ້ນແຂວງຄຸ້ມຄອງ ແລະ ນິຕິກຳໃຕ້ກົດໝາຍ.

**ມາດຕາ 10 (ໃໝ່) ການຕິດຕາມກວດການິຕິກຳ**

ການຕິດຕາມກວດການິຕິກຳ ແມ່ນ ການຕິດຕາມກວດກາ ການສ້າງ, ປັບປຸງ ແລະ ປະຕິບັດ ນິຕິກຳ ຂອງອົງການບໍລິຫານລັດ, ອົງການໄອຍະການປະຊາຊົນ, ສານປະຊາຊົນ, ອົງການກວດກາລັດ, ອົງການກວດສອບແຫ່ງລັດ ທີ່ເຫັນວ່າຂັດກັບ ລັດຖະທຳມະນູນ, ກົດໝາຍ ເພື່ອສະເໜີໂຈະການຈັດຕັ້ງປະຕິບັດບາງ ເນື້ອໃນ, ມາດຕາ ຫຼື ທັງໝົດ ຫຼື ຍົກເລີກ ນິຕິກຳນັ້ນ, ຍົກເວັ້ນຄຳຕັດສິນ ກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ.

**ມາດຕາ 11 (ໃໝ່) ການຕິດຕາມກວດກາການແກ້ໄຂຄຳຮ້ອງທຸກ**

ການຕິດຕາມກວດກາການແກ້ໄຂຄຳຮ້ອງທຸກ ແມ່ນ ການຕິດຕາມກວດກາ ແລະ ຊຸກຍູ້ອົງການທີ່ກ່ຽວຂ້ອງພິຈາລະນາ ແລະ ແກ້ໄຂ ຄຳສະເໜີ, ຄຳຮ້ອງຟ້ອງ ແລະ ຄຳຮ້ອງຂໍຄວາມເປັນທຳ ໃຫ້ມີຄວາມຖືກຕ້ອງ, ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ມີຄວາມໂປ່ງໃສ ແລະ ຍຸຕິທຳ.

**ມາດຕາ 12 (ໃໝ່) ການຕິດຕາມກວດກາສະເພາະ**

ການຕິດຕາມກວດກາສະເພາະ ແມ່ນ ການຕິດຕາມກວດກາບັນຫາໃດໜຶ່ງ ທີ່ເຫັນວ່າຈຳເປັນ ແລະ ຮີບດ່ວນຕາມການຕົກລົງຂອງ ກອງປະຊຸມສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມສະພາປະຊາຊົນຂັ້ນແຂວງ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕາມການສະເໜີຂອງ ຄະນະປະຈຳສະພາແຫ່ງຊາດ, ນາຍົກລັດຖະມົນຕີ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ສະມາຊິກສະພາແຫ່ງຊາດ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງຂັ້ນເມືອງ, ສະມາຊິກສະພາປະຊາຊົນຂັ້ນແຂວງ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນ.

**ມາດຕາ 13 (ປັບປຸງ) ຄວາມຮັບຜິດຊອບໃນການຕິດຕາມກວດກາ**

ກອງປະຊຸມ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ມີຄວາມຮັບຜິດຊອບໃນການຕິດຕາມກວດກາ ແລະ ລາຍງານການເຄື່ອນໄຫວວຽກງານຕິດຕາມກວດກາຂອງຕົນ ຕໍ່ຜູ້ມີສິດເລືອກຕັ້ງ.

ຄະນະປະຈຳ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ມີຄວາມຮັບຜິດຊອບໃນການຕິດຕາມກວດກາ ແລະ ລາຍງານການເຄື່ອນໄຫວວຽກງານຕິດຕາມກວດກາຂອງຕົນ ຕໍ່ ກອງປະຊຸມສະພາແຫ່ງຊາດ, ກອງປະຊຸມສະພາປະຊາຊົນຂັ້ນແຂວງ.

ກຳມາທິການສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ຄະນະກຳມະການສະພາປະຊາຊົນຂັ້ນແຂວງ, ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງຂັ້ນເມືອງ ມີຄວາມຮັບຜິດຊອບໃນການຕິດຕາມກວດກາ ແລະ ລາຍງານການເຄື່ອນໄຫວວຽກງານຕິດຕາມກວດກາຂອງຕົນ ຕໍ່ ຄະນະປະຈຳສະພາແຫ່ງຊາດ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ສະມາຊິກ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ມີຄວາມຮັບຜິດຊອບໃນການຕິດຕາມກວດກາ ແລະ ລາຍງານການເຄື່ອນໄຫວວຽກງານຕິດຕາມກວດກາຂອງຕົນ ຕໍ່ ກຳມາທິການ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ແລະ ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງຂັ້ນເມືອງ ທີ່ຕົນສັງກັດ.

**ມາດຕາ 14 (ປັບປຸງ) ການເຂົ້າຮ່ວມໃນການຕິດຕາມກວດກາ**

ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ທຸກຂັ້ນ ແລະ ປະຊາຊົນລາວບັນດາເຜົ່າ ມີ ສິດ, ໜ້າທີ່ ແລະ ພັນທະ ເຂົ້າຮ່ວມໃນການເຄື່ອນໄຫວຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

**ມາດຕາ 15 (ປັບປຸງ) ການແກ້ໄຂຜົນການຕິດຕາມກວດກາ**

ໃນການຕິດຕາມກວດກາ ຖ້າຫາກພົບເຫັນການຈັດຕັ້ງ ຫຼື ບຸກຄົນລາກອນ ມີການກະທຳທີ່ເປັນການລະເມີດກົດໝາຍ, ນິຕິກຳໃຕ້ກົດໝາຍ ກໍ່ຄວາມເສຍຫາຍໃຫ້ແກ່ປະເທດຊາດ, ລວມໝູ່ ຫຼື ສິດ, ຜົນປະໂຫຍດອັນຊອບທຳຂອງພົນລະເມືອງນັ້ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ສະເໜີການຈັດຕັ້ງ ຫຼື ບຸກຄົນລາກອນ ທີ່ກ່ຽວຂ້ອງແກ້ໄຂຜົນການຕິດຕາມກວດກາ ແລ້ວລາຍງານຜົນການແກ້ໄຂ ຕໍ່ສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ນິຕິກຳອື່ນ ທີ່ກ່ຽວຂ້ອງ.

ຄະນະປະຈຳສະພາແຫ່ງຊາດ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາ ແລະ ຊຸກຍູ້ ອົງການທີ່ກ່ຽວຂ້ອງ ພິຈາລະນາ ແລະ ແກ້ໄຂຜົນການຕິດຕາມກວດກາ.

## ພາກທີ III
## ການຕິດຕາມກວດກາຂອງສະພາແຫ່ງຊາດ

**ມາດຕາ 16 (ປັບປຸງ) ການຕິດຕາມກວດກາຂອງສະພາແຫ່ງຊາດ**

ສະພາແຫ່ງຊາດ ດຳເນີນການຕິດຕາມກວດກາ ໂດຍ:

1. ກອງປະຊຸມສະພາແຫ່ງຊາດ;
2. ຄະນະປະຈຳສະພາແຫ່ງຊາດ;
3. ກຳມາທິການສະພາແຫ່ງຊາດ;
4. ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ;
5. ສະມາຊິກສະພາແຫ່ງຊາດ.

ໃນການຕິດຕາມກວດກາ ເມື່ອມີຄວາມຈຳເປັນ ອາດແຕ່ງຕັ້ງ ຄະນະກຳມະການກວດກາຊົ່ວຄາວ, ຄະນະສະເພາະກິດ ແລະ ໜ່ວຍສະເພາະກິດ ຕາມແຕ່ລະກໍລະນີ.

## ໝວດທີ 1
## ການຕິດຕາມກວດກາຂອງກອງປະຊຸມສະພາແຫ່ງຊາດ

**ມາດຕາ 17 (ປັບປຸງ) ການຕິດຕາມກວດກາຂອງກອງປະຊຸມສະພາແຫ່ງຊາດ**

ການຕິດຕາມກວດກາຂອງກອງປະຊຸມສະພາແຫ່ງຊາດ ແມ່ນ ການຕິດຕາມກວດກາສູງສຸດຂອງສະພາແຫ່ງຊາດ ບົນພື້ນຖານການເຄື່ອນໄຫວຕິດຕາມກວດກາຂອງ ຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ.

**ມາດຕາ 18 (ປັບປຸງ) ເປົ້າໝາຍຖືກຕິດຕາມກວດກາຂອງກອງປະຊຸມສະພາແຫ່ງຊາດ**

ເປົ້າໝາຍຖືກຕິດຕາມກວດກາຂອງກອງປະຊຸມສະພາແຫ່ງຊາດ ມີ ດັ່ງນີ້:

1. ປະທານ ແລະ ຮອງປະທານ ປະເທດ;
2. ປະທານ ແລະ ຮອງປະທານ ສະພາແຫ່ງຊາດ;
3. ກຳມະການຄະນະປະຈຳສະພາແຫ່ງຊາດ;
4. ປະທານ, ຮອງປະທານ ກຳມາທິການ ແລະ ເລຂາທິການ ສະພາແຫ່ງຊາດ;
5. ນາຍົກ, ຮອງນາຍົກ ລັດຖະມົນຕີ, ລັດຖະມົນຕີ ແລະ ຫົວໜ້າອົງການລັດທຽບເທົ່າກະຊວງ;
6. ຫົວໜ້າອົງການໄອຍະການປະຊາຊົນສູງສຸດ;
7. ປະທານສານປະຊາຊົນສູງສຸດ ແລະ ສະມາຊິກສະພາຜູ້ພິພາກສາຂອງສານປະຊາຊົນສູງສຸດ;
8. ປະທານອົງການກວດກາແຫ່ງລັດ;
9. ປະທານອົງການກວດສອບແຫ່ງລັດ.

**ມາດຕາ 19 (ປັບປຸງ) ແຜນການຕິດຕາມກວດກາຂອງສະພາແຫ່ງຊາດ**

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ສ້າງແຜນການຕິດຕາມກວດກາຂອງສະພາແຫ່ງຊາດ ແລ້ວສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ເພື່ອພິຈາລະນາຮັບຮອງເອົາ. ໃນກໍລະນີຈຳເປັນຮີບດ່ວນ ຄະນະປະຈຳສະພາແຫ່ງຊາດ ຈະຕົກລົງໃຫ້ດຳເນີນການຕິດຕາມກວດການອກແຜນການກໍໄດ້ ແລ້ວລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ ເພື່ອຖັດໄປ.

**ມາດຕາ 20 (ປັບປຸງ) ເນື້ອໃນການຕິດຕາມກວດກາ ຂອງກອງປະຊຸມສະພາແຫ່ງຊາດ**

ກອງປະຊຸມສະພາແຫ່ງຊາດ ເຄື່ອນໄຫວຕິດຕາມກວດກາ ຕາມເນື້ອໃນ ດັ່ງນີ້:

1. ບົດລາຍງານຂອງ ປະທານປະເທດ, ຄະນະປະຈຳສະພາແຫ່ງຊາດ, ລັດຖະບານ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ, ປະທານອົງການກວດກາແຫ່ງລັດ ແລະ ປະທານອົງການກວດສອບແຫ່ງລັດ;

2. ນິຕິກຳຂອງ ບັນດາເປົ້າໝາຍຖືກຕິດຕາມກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້ ທີ່ເຫັນວ່າຂັດກັບ ລັດຖະທຳມະນູນ, ກົດໝາຍ ຫຼື ມະຕິກອງປະຊຸມສະພາແຫ່ງຊາດ, ຍົກເວັ້ນຄຳຕົກລົງກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;

3. ການຊັກຖາມ ແລະ ການຕອບຄຳຊັກຖາມຂອງບັນດາເປົ້າໝາຍຖືກຕິດຕາມກວດກາ;

4. ການແກ້ໄຂຄຳຮ້ອງທຸກ;

5. ບົດລາຍງານຂອງຄະນະກຳມະການກວດກາຊົ່ວຄາວ.

**ມາດຕາ 21 (ປັບປຸງ) ການຕິດຕາມກວດກາບົດລາຍງານ ໃນກອງປະຊຸມສະພາແຫ່ງຊາດ**

ກອງປະຊຸມສະພາແຫ່ງຊາດ ຕິດຕາມກວດກາບົດລາຍງານການເຄື່ອນໄຫວວຽກງານ ຂອງບັນດາເປົ້າໝາຍຖືກຕິດຕາມກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້.

ບົດລາຍງານດັ່ງກ່າວ ຕ້ອງໄດ້ຜ່ານການຄົ້ນຄວ້າ, ພິຈາລະນາຂອງກຳມາທິການທີ່ກ່ຽວຂ້ອງ ຂອງສະພາແຫ່ງຊາດ ຕາມການມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ, ຍົກເວັ້ນ ບົດລາຍງານຂອງ ປະທານປະເທດ ແລະ ຄະນະປະຈຳສະພາແຫ່ງຊາດ ໃນກອງປະຊຸມສະພາແຫ່ງຊາດ.

ກອງປະຊຸມສະພາແຫ່ງຊາດ ຕິດຕາມກວດກາ ບົດລາຍງານຕາມຂັ້ນຕອນ ດັ່ງນີ້:

1. ປະທານປະເທດ, ຄະນະປະຈຳສະພາແຫ່ງຊາດ, ລັດຖະບານ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ, ປະທານອົງການກວດກາແຫ່ງລັດ ແລະ ປະທານອົງການກວດສອບແຫ່ງລັດ ລາຍງານ;

2. ຄະນະປະຈຳສະພາແຫ່ງຊາດ ຫຼື ປະທານກຳມາທິການຂອງສະພາແຫ່ງຊາດ ທີ່ຖືກມອບໝາຍ ປະກອບຄຳເຫັນຕໍ່ບົດລາຍງານ;

3. ສະມາຊິກສະພາແຫ່ງຊາດ ຄົ້ນຄວ້າ, ປະກອບຄຳເຫັນ ແລະ ຊັກຖາມ;

4. ຜູ້ລາຍງານ ຊີ້ແຈງ ແລະ ຕອບຄຳຊັກຖາມ.

ກອງປະຊຸມສະພາແຫ່ງຊາດ ອາດສະເໜີໃຫ້ເປົ້າໝາຍຖືກຕິດຕາມກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້ ມາໃຫ້ຄວາມກະຈ່າງແຈ້ງກ່ຽວກັບບັນຫາໃດໜຶ່ງສະເພາະ ເມື່ອເຫັນວ່າມີຄວາມຈຳເປັນ.

**ມາດຕາ 22 (ປັບປຸງ) ການຕິດຕາມກວດການິຕິກຳ ໃນກອງປະຊຸມສະພາແຫ່ງຊາດ**

ກອງປະຊຸມສະພາແຫ່ງຊາດ ຕິດຕາມກວດການິຕິກຳຂອງ ປະທານປະເທດ, ຄະນະປະຈຳສະພາແຫ່ງຊາດ, ລັດຖະບານ, ນາຍົກລັດຖະມົນຕີ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ, ປະທານອົງການກວດກາແຫ່ງລັດ ແລະ ປະທານອົງການກວດສອບແຫ່ງລັດ ທີ່ຂັດກັບ ລັດຖະທຳມະນູນ, ກົດໝາຍ ຫຼື ມະຕິກອງປະຊຸມສະພາແຫ່ງຊາດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ຫຼື ມີການສະເໜີຢ່າງໜ້ອຍໜຶ່ງສ່ວນສີ່ ຂອງຈຳນວນສະມາຊິກສະພາແຫ່ງຊາດທັງໝົດ.

ກອງປະຊຸມສະພາແຫ່ງຊາດ ຕິດຕາມກວດການິຕິກຳ ຕາມຂັ້ນຕອນ ດັ່ງນີ້:

1. ປະທານຄະນະປະຈຳສະພາແຫ່ງຊາດ ລາຍງານ;

2. ສະມາຊິກສະພາແຫ່ງຊາດ ຄົ້ນຄວ້າ, ປະກອບຄຳເຫັນ;

3. ຜູ້ອອກນິຕິກຳ ຊີ້ແຈງ, ອະທິບາຍ;

4. ການລົງມະຕິຮັບຮອງເອົາການຍົກເລີກ ນິຕິກຳນັ້ນ ເປັນບາງ ເນື້ອໃນ, ມາດຕາ ຫຼື ທັງໝົດ.

**ມາດຕາ 23 (ປັບປຸງ) ການຕິດຕາມກວດກາຜ່ານການຊັກຖາມ ແລະ ການຕອບຄຳຊັກຖາມໃນກອງປະຊຸມສະພາແຫ່ງຊາດ**

ໃນກອງປະຊຸມສະພາແຫ່ງຊາດ ການຊັກຖາມ ແລະ ການຕອບຄຳຊັກຖາມ ໃຫ້ປະຕິບັດ ດັ່ງນີ້:

ກ. ການຊັກຖາມ:

1. ຄະນະປະຈຳສະພາແຫ່ງຊາດ ສັງລວມຄຳຊັກຖາມຈາກຜົນການຕິດຕາມກວດກາຂອງ ບັນດາກຳມາທິການ ແລະ ສະມາຊິກສະພາແຫ່ງຊາດ ທີ່ເປັນບັນຫາ ພົ້ນເດັ່ນ, ພື້ນຖານສຳຄັນຂອງປະເທດຊາດ ແລ້ວສົ່ງຄຳຊັກຖາມໃຫ້ເປົ້າໝາຍຖືກຊັກຖາມ ພາຍໃນເວລາ ສິບຫ້າວັນ ລັດຖະການ ກ່ອນການດຳເນີນກອງປະຊຸມ;

2. ສະມາຊິກສະພາແຫ່ງຊາດ ຊັກຖາມເປົ້າໝາຍທີ່ກ່ຽວຂ້ອງ.

ຂ. ການຕອບຄຳຊັກຖາມ:

1. ຜູ້ຖືກຊັກຖາມ ຕອບຄຳຊັກຖາມ ຕາມຄຳຊັກຖາມ ທີ່ຄະນະປະຈຳສະພາແຫ່ງຊາດ ສົ່ງໃຫ້;

2. ຜູ້ຖືກຊັກຖາມ ຕອບຄຳຊັກຖາມ ທີ່ສະມາຊິກສະພາແຫ່ງຊາດ ຊັກຖາມຕື່ມ.

ຜູ້ຖືກຊັກຖາມ ຕ້ອງຕອບຄຳຊັກຖາມ ໃຫ້ຖືກຕ້ອງ, ຊັດເຈນ.

ຫຼັງຈາກຟັງການຕອບຄຳຊັກຖາມແລ້ວ ຖ້າສະມາຊິກສະພາແຫ່ງຊາດ ຫາກບໍ່ເຫັນດີຕໍ່ຄຳຕອບນັ້ນ ກໍສະເໜີໃຫ້ຜູ້ຖືກຊັກຖາມ ຊີ້ແຈງຕໍ່ກອງປະຊຸມຕື່ມ. ຖ້າເຫັນວ່າຈຳເປັນ ປະທານກອງປະຊຸມ ກໍສະເໜີໃຫ້ກອງປະຊຸມລົງມະຕິຕໍ່ການຕອບຄຳຊັກຖາມ ດັ່ງກ່າວ.

**ມາດຕາ 24 ການຕິດຕາມກວດກາ ການແກ້ໄຂຄຳຮ້ອງທຸກ ໃນກອງປະຊຸມສະພາແຫ່ງຊາດ**

ກອງປະຊຸມສະພາແຫ່ງຊາດ ຕິດຕາມກວດກາ ການແກ້ໄຂຄຳຮ້ອງທຸກຂອງ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໂດຍຄະນະປະຈຳສະພາແຫ່ງຊາດ, ລັດຖະບານ, ອົງການໄອຍະການປະຊາຊົນສູງສຸດ ແລະ ສານປະຊາຊົນສູງສຸດ.

ກອງປະຊຸມສະພາແຫ່ງຊາດ ຕິດຕາມກວດກາການແກ້ໄຂຄຳຮ້ອງທຸກ ຕາມຂັ້ນຕອນ ດັ່ງນີ້:

1. ຄະນະປະຈຳສະພາແຫ່ງຊາດ ລາຍງານ;

2. ສະມາຊິກສະພາແຫ່ງຊາດ ຄົ້ນຄວ້າ, ປະກອບຄຳເຫັນ;

3. ຄະນະປະຈຳສະພາແຫ່ງຊາດ ຊີ້ແຈງ, ອະທິບາຍ;

4. ການລົງມະຕິຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 25 (ປັບປຸງ) ການແຕ່ງຕັ້ງຄະນະກຳມະການກວດກາຊົ່ວຄາວ**

ປະທານສະພາແຫ່ງຊາດ ແຕ່ງຕັ້ງຄະນະກຳມະການກວດກາຊົ່ວຄາວຂອງສະພາແຫ່ງຊາດ ຕາມການຕົກລົງຂອງກອງປະຊຸມສະພາແຫ່ງຊາດ ເພື່ອຕິດຕາມກວດກາລະອຽດ ກ່ຽວກັບບັນຫາໃດໜຶ່ງທີ່ເຫັນວ່າມີຄວາມຈຳເປັນ ຕາມການສະເໜີຂອງ ຄະນະປະຈຳສະພາແຫ່ງຊາດ, ກຳມາທິການຂອງສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ.

ຄະນະກຳມະການກວດກາຊົ່ວຄາວ ປະກອບດ້ວຍ ສະມາຊິກສະພາແຫ່ງຊາດ ແລະ ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງຈຳນວນໜຶ່ງ ຊຶ່ງມີ ສິດ ແລະ ໜ້າ ທີ່ດັ່ງດຽວກັນກັບຄະນະສະເພາະກິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 37 ຂອງກົດໝາຍສະບັບນີ້. ຄະນະດັ່ງກ່າວ ຈະຖືກຍຸບເລີກໄປໃນຕົວ ພາຍຫຼັງໄດ້ສຳເລັດການປະຕິບັດໜ້າທີ່.

ມະຕິແຕ່ງຕັ້ງຄະນະກຳມະການກວດກາຊົ່ວຄາວ ຕ້ອງສົ່ງໃຫ້ເປົ້າໝາຍຖືກຕິດຕາມກວດກາ ແລະ ອົງການທີ່ກ່ຽວຂ້ອງ ເຈັດວັນ ກ່ອນດຳເນີນການຕິດຕາມກວດກາ.

**ມາດຕາ 26 (ປັບປຸງ) ການຕິດຕາມກວດກາບົດລາຍງານ ຂອງຄະນະກຳມະການກວດກາຊົ່ວຄາວ**

ກອງປະຊຸມສະພາແຫ່ງຊາດ ຕິດຕາມກວດກາບົດລາຍງານ ຂອງຄະນະກຳມະການກວດກາຊົ່ວຄາວ ຕາມຂັ້ນຕອນ ດັ່ງນີ້:

1. ຫົວໜ້າຄະນະກຳມະການກວດກາຊົ່ວຄາວ ລາຍງານຜົນການຕິດຕາມກວດກາ;
2. ຜູ້ຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍ;
3. ສະມາຊິກສະພາແຫ່ງຊາດ ຄົ້ນຄວ້າ, ປະກອບຄຳເຫັນ;
4. ຜູ້ຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍ ເພີ່ມເຕີມ;
5. ການລົງມະຕິຮັບຮອງເອົາບົດລາຍງານຜົນການຕິດຕາມກວດກາ.

**ມາດຕາ 27 (ປັບປຸງ) ການໃຫ້ຄະແນນໄວ້ວາງໃຈ, ການລົງມະຕິບໍ່ໄວ້ວາງໃຈ ແລະ ການປົດຕຳແໜ່ງ**

ການໃຫ້ຄະແນນໄວ້ວາງໃຈ, ການລົງມະຕິບໍ່ໄວ້ວາງໃຈ ແລະ ການປົດຕຳແໜ່ງ ມີ ດັ່ງນີ້:

ກ. ການໃຫ້ຄະແນນໄວ້ວາງໃຈ

ການໃຫ້ຄະແນນໄວ້ວາງໃຈ ແມ່ນ ການປະເມີນຜົນການປະຕິບັດໜ້າທີ່ວຽກງານ ຕໍ່ບຸກຄະລາກອນທີ່ສະພາແຫ່ງຊາດ ເລືອກຕັ້ງ ຫຼື ຮັບຮອງເອົາການສະເໜີແຕ່ງຕັ້ງ ໂດຍສະມາຊິກສະພາແຫ່ງຊາດ.

ການໃຫ້ຄະແນນ ດຳເນີນ ແບບປົດລັບ, ໂດຍກົງ, ພາວະວິໄສ, ຍຸຕິທຳ ແລະ ບໍ່ອະຄະຕິ;

ຂ. ການລົງມະຕິບໍ່ໄວ້ວາງໃຈ

ການລົງມະຕິບໍ່ໄວ້ວາງໃຈ ແມ່ນ ການລົງຄະແນນສຽງ ຂອງສະມາຊິກສະພາແຫ່ງຊາດ ຕໍ່ເປົ້າໝາຍຖືກຕິດຕາມກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້, ຕໍ່ສະມາຊິກລັດຖະບານທ່ານໃດໜຶ່ງ ຫຼື ທັງໝົດຄະນະ ທີ່ສ້າງຄວາມເສຍຫາຍ ແກ່ຜົນປະໂຫຍດຂອງປະເທດຊາດ ແລະ ປະຊາຊົນ ຕາມການສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ຫຼື ມີການສະເໜີຢ່າງໜ້ອຍ ໜຶ່ງສ່ວນສີ່ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທັງໝົດ.

ຄ. ການປົດຕຳແໜ່ງ

ການປົດຕຳແໜ່ງ ແມ່ນ ການລົງຄະແນນສຽງ ຂອງສະມາຊິກສະພາແຫ່ງຊາດ ຕໍ່ບຸກຄະລາກອນ ທີ່ສະພາແຫ່ງຊາດ ເລືອກຕັ້ງ ຫຼື ຮັບຮອງເອົາການສະເໜີແຕ່ງຕັ້ງ ທີ່ສ້າງຄວາມເສຍຫາຍ ຕໍ່ຜົນປະໂຫຍດຂອງປະເທດຊາດ ແລະ ປະຊາຊົນ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ຫຼື ມີການສະເໜີຢ່າງໜ້ອຍ ໜຶ່ງສ່ວນສີ່ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທັງໝົດ.

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ກຳນົດລະບຽບການກ່ຽວກັບການໃຫ້ຄະແນນໄວ້ວາງໃຈ, ການລົງມະຕິບໍ່ໄວ້ວາງໃຈ ແລະ ການປົດຕຳແໜ່ງ.

## ໝວດທີ 2
## ການຕິດຕາມກວດກາຂອງຄະນະປະຈຳສະພາແຫ່ງຊາດ

**ມາດຕາ 28 (ປັບປຸງ) ເປົ້າໝາຍຖືກຕິດຕາມກວດກາ ຂອງຄະນະປະຈຳສະພາແຫ່ງຊາດ**

ເປົ້າໝາຍຖືກຕິດຕາມກວດກາຂອງຄະນະປະຈຳສະພາແຫ່ງຊາດ ມີ ດັ່ງນີ້:

1. ນາຍົກ, ຮອງນາຍົກ ລັດຖະມົນຕີ, ລັດຖະມົນຕີ ແລະ ຫົວໜ້າອົງການລັດທຽບເທົ່າກະຊວງ;

2. ປະທານ, ສະມາຊິກສະພາຜູ້ພິພາກສາ ສານປະຊາຊົນສູງສຸດ, ຜູ້ພິພາກສາຂອງສານປະຊາຊົນທຸກຂັ້ນ, ປະທານ ແລະ ຮອງປະທານ ສານປະຊາຊົນທ້ອງຖິ່ນ;

3. ຫົວໜ້າ, ຄະນະກຳມະການ ອົງການໄອຍະການປະຊາຊົນສູງສຸດ;

4. ປະທານອົງການກວດກາແຫ່ງລັດ;

5. ປະທານ ອົງການກວດສອບແຫ່ງລັດ, ອົງການກວດສອບປະຈຳພາກ;

6. ປະທານ, ຮອງປະທານ, ກຳມະການ ກຳມາທິການສະພາແຫ່ງຊາດ, ເລຂາທິການ, ຮອງເລຂາທິການ ສະພາແຫ່ງຊາດ;

7. ປະທານ, ຮອງປະທານ, ກຳມະການ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ.

**ມາດຕາ 29 (ປັບປຸງ) ເນື້ອໃນການຕິດຕາມກວດກາ ຂອງຄະນະປະຈຳສະພາແຫ່ງຊາດ**

ຄະນະປະຈຳສະພາແຫ່ງຊາດ ຕິດຕາມກວດກາ ຕາມເນື້ອໃນ ດັ່ງນີ້:

1. ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ, ມະຕິຄະນະປະຈຳສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ໂຄງການຂອງລັດຖະບານ, ການເຄື່ອນໄຫວຂອງ ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ;

2. ນິຕິກຳຂອງບັນດາເປົ້າໝາຍຖືກຕິດຕາມກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 28 ຂອງກົດໝາຍສະບັບນີ້ ທີ່ເຫັນວ່າຂັດກັບ ລັດຖະທຳມະນູນ, ກົດໝາຍ ຫຼື ມະຕິກອງປະຊຸມສະພາແຫ່ງຊາດ, ຍົກເວັ້ນຄຳຕັດສິນ ກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;

3. ການໃຫ້ຄວາມກະຈ່າງແຈ້ງຂອງ ເປົ້າໝາຍຖືກຕິດຕາມກວດກາ;

4. ບົດລາຍງານຂອງ ກຳມາທິການສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ແລະ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ;

5. ການເລືອກຕັ້ງສະມາຊິກສະພາແຫ່ງຊາດ;

6. ການແກ້ໄຂຄຳຮ້ອງທຸກ;

7. ບົດລາຍງານບັນຫາໃດໜຶ່ງຂອງຄະນະສະເພາະກິດ.

**ມາດຕາ 30 ການສ້າງແຜນການຕິດຕາມກວດກາ**

ຄະນະປະຈຳສະພາແຫ່ງຊາດ ສ້າງແຜນການຕິດຕາມກວດກາ ປະຈຳຫົກເດືອນ ແລະ ປະຈຳປີ ໂດຍອີງຕາມແຜນການຕິດຕາມກວດກາຂອງກອງປະຊຸມສະພາແຫ່ງຊາດ ແລະ ຕາມການສະເໜີຂອງ ກຳມາທິການສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ. ພາຍຫຼັງທີ່ແຜນການໄດ້ຖືກຮັບຮອງເອົາແລ້ວ ຄະນະປະຈຳສະພາແຫ່ງຊາດ ແບ່ງຄວາມຮັບຜິດຊອບໃຫ້ກຳມະການຄະນະປະຈຳສະພາແຫ່ງຊາດ, ກຳມາທິການສະພາແຫ່ງຊາດ ເພື່ອຈັດຕັ້ງປະຕິບັດ ແລ້ວລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດ ເພື່ອມີວິທີການ ແລະ ມາດຕະການແກ້ໄຂຢ່າງເໝາະສົມ ແລະ ທັນເວລາ.

**ມາດຕາ 31 ການຕິດຕາມກວດກາບົດລາຍງານ ໃນກອງປະຊຸມຄະນະປະຈຳສະພາແຫ່ງຊາດ**

ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຕິດຕາມກວດກາບົດລາຍງານຂອງເປົ້າໝາຍຖືກຕິດຕາມກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 28 ຂອງກົດໝາຍສະບັບນີ້ ຖ້າເຫັນວ່າມີຄວາມຈຳເປັນ ກໍເຊີນການຈັດຕັ້ງ ຫຼື ບຸກຄະລາກອນດັ່ງກ່າວ ມາໃຫ້ຄວາມກະຈ່າງແຈ້ງຕື່ມອີກ.

ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຕິດຕາມກວດກາບົດລາຍງານ ຕາມຂັ້ນຕອນ ດັ່ງນີ້:

1. ເປົ້າໝາຍຖືກຕິດຕາມກວດກາ ລາຍງານ;
2. ປະທານກຳມາທິການຂອງສະພາແຫ່ງຊາດ ທີ່ຖືກມອບໝາຍ ມີຄຳເຫັນ;
3. ຄະນະປະຈຳສະພາແຫ່ງຊາດ ຄົ້ນຄວ້າ, ປະກອບຄຳເຫັນ;
4. ເປົ້າໝາຍຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍ;
5. ການລົງມະຕິຮັບຮອງເອົາບົດລາຍງານ.

**ມາດຕາ 32 (ປັບປຸງ) ການຕິດຕາມກວດການິຕິກຳ**

ຄະນະປະຈຳສະພາແຫ່ງຊາດ ຊຸກຍູ້ໃຫ້ລັດຖະບານ, ນາຍົກລັດຖະມົນຕີ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ, ປະທານອົງການກວດກາແຫ່ງລັດ ແລະ ປະທານອົງການກວດສອບແຫ່ງລັດ ອອກນິຕິກຳເພື່ອຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ ໃຫ້ທັນເວລາ ແລະ ຕິດຕາມກວດກາ, ພິຈາລະນານິຕິກຳດັ່ງກ່າວ. ກ່ອນຈະພິຈາລະນານັ້ນ ຄະນະປະຈຳສະພາແຫ່ງຊາດ ມອບນິຕິກຳນັ້ນໃຫ້ກຳມາທິການສະພາແຫ່ງຊາດທີ່ກ່ຽວຂ້ອງ ຄົ້ນຄວ້າ, ກະກຽມປະກອບຄຳເຫັນເສຍກ່ອນ.

ຄະນະປະຈຳສະພາແຫ່ງຊາດ ສະເໜີໃຫ້ໂຈະການຈັດຕັ້ງປະຕິບັດນິຕິກຳຂອງອົງການລັດ ທີ່ຂັດກັບ ລັດຖະທຳມະນູນ, ກົດໝາຍ ຫຼື ມະຕິກອງປະຊຸມສະພາແຫ່ງຊາດ ແລ້ວນຳສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ພິຈາລະນາ, ຍົກເວັ້ນຄຳຕັດສິນ ກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ.

ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ພິຈາລະນານິຕິກຳ ຕາມຂັ້ນຕອນ ດັ່ງນີ້:

1. ປະທານກຳມາທິການສະພາແຫ່ງຊາດ ລາຍງານຜົນການຕິດຕາມກວດກາ;
2. ຜູ້ອອກນິຕິກຳ ຊີ້ແຈງ, ອະທິບາຍ;
3. ຄະນະປະຈຳສະພາແຫ່ງຊາດ ຄົ້ນຄວ້າ, ມີຄຳເຫັນ;

4. ຜູ້ອອກນິຕິກຳ ຊີ້ແຈງ, ອະທິບາຍເພີ່ມເຕີມ;

5. ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ, ລົງມະຕິຮັບຮອງເອົາບົດລາຍງານຜົນການຕິດຕາມກວດກາ.

**ມາດຕາ 33 (ໃໝ່) ການຕິດຕາມກວດກາການໃຫ້ຄວາມກະຈ່າງແຈ້ງຂອງເປົ້າໝາຍຖືກຕິດຕາມກວດກາ ໃນກອງປະຊຸມຄະນະປະຈຳສະພາແຫ່ງຊາດ**

ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຕິດຕາມກວດກາການໃຫ້ຄວາມກະຈ່າງແຈ້ງຂອງເປົ້າໝາຍຖືກຕິດຕາມກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 28 ຂອງກົດໝາຍສະບັບນີ້ ຕໍ່ບັນຫາໃດໜຶ່ງ ທີ່ຄະນະປະຈຳສະພາແຫ່ງຊາດຊັກຖາມ ໂດຍໃຫ້ເປົ້າໝາຍຖືກຕິດຕາມກວດກາ ລາຍງານ, ຊີ້ແຈງ ໃຫ້ຄວາມກະຈ່າງແຈ້ງຕໍ່ບັນຫານັ້ນ ໃຫ້ມີຄວາມຖືກຕ້ອງຕາມກົດໝາຍ ແລະ ສອດຄ່ອງກັບຄວາມເປັນຈິງ.

ການຕິດຕາມກວດກາການໃຫ້ຄວາມກະຈ່າງແຈ້ງ ຂອງກອງປະຊຸມຄະນະປະຈຳສະພາແຫ່ງຊາດ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ເປົ້າໝາຍຖືກຕິດຕາມກວດກາລາຍງານໃຫ້ຄວາມກະຈ່າງແຈ້ງ ຕໍ່ຂໍ້ຊັກຖາມ;

2. ຄະນະປະຈຳສະພາແຫ່ງຊາດ ຄົ້ນຄວ້າ, ປະກອບຄຳເຫັນ ແລະ ຊັກຖາມ;

3. ເປົ້າໝາຍຖືກຕິດຕາມກວດກາ ຊີ້ແຈງເພີ່ມເຕີມ;

4. ປະທານກອງປະຊຸມສັງລວມ.

**ມາດຕາ 34 (ໃໝ່) ການຕິດຕາມກວດກາບົດລາຍງານ ຂອງກຳມາທິການສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາແຫ່ງຊາດ**

ກຳມາທິການຂອງສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາແຫ່ງຊາດ ລາຍງານການເຄື່ອນໄຫວວຽກງານຂອງຕົນ ຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ.

ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຕິດຕາມກວດກາບົດລາຍງານ ຂອງກຳມາທິການສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາແຫ່ງຊາດ ຕາມຂັ້ນຕອນ ດັ່ງນີ້:

1. ກຳມາທິການຂອງສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາແຫ່ງຊາດ ລາຍງານ;

2. ຄະນະປະຈຳສະພາແຫ່ງຊາດ ຄົ້ນຄວ້າ, ປະກອບຄຳເຫັນ;

3. ຜູ້ລາຍງານ ຊີ້ແຈງ, ອະທິບາຍ;

4. ປະທານກອງປະຊຸມສັງລວມ.

**ມາດຕາ 35 ການຕິດຕາມກວດກາການເລືອກຕັ້ງສະມາຊິກສະພາແຫ່ງຊາດ**

ຄະນະປະຈຳສະພາແຫ່ງຊາດ ຕິດຕາມກວດກາການເຄື່ອນໄຫວວຽກງານຂອງ ຄະນະກຳມະການເລືອກຕັ້ງລະດັບຊາດ ແລະ ຄະນະກຳມະການເລືອກຕັ້ງຂັ້ນທ້ອງຖິ່ນ ເພື່ອເຮັດໃຫ້ການເລືອກຕັ້ງໄດ້ດຳເນີນໄປຢ່າງມີປະຊາທິປະໄຕ, ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 36 ການຕິດຕາມກວດກາການແກ້ໄຂຄຳຮ້ອງທຸກ**

ຄະນະປະຈຳສະພາແຫ່ງຊາດ ຕິດຕາມກວດກາການແກ້ໄຂຄຳຮ້ອງທຸກໂດຍ ລັດຖະບານ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ສະພາປະຊາຊົນຂັ້ນແຂວງ ໃນການປະຕິບັດ ກົດໝາຍ ແລະ ລະບຽບການກ່ຽວກັບການແກ້ໄຂຄຳຮ້ອງທຸກ.

ໃນການຕິດຕາມກວດກາ ຖ້າເຫັນວ່າການຈັດຕັ້ງ ແລະ ບຸກຄະລາກອນ ຫາກມີການລະເມີດກົດໝາຍນັ້ນ, ຄະນະປະຈຳສະພາແຫ່ງຊາດ ສະເໜີໃຫ້ອົງການທີ່ກ່ຽວຂ້ອງ ແກ້ໄຂຜົນການຕິດຕາມກວດກາ ຕາມກົດໝາຍ ແລະ ລະບຽບການ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ ແລ້ວລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ໃນການແກ້ໄຂນັ້ນ.

**ມາດຕາ 37 (ປັບປຸງ) ການແຕ່ງຕັ້ງຄະນະສະເພາະກິດ**

ຄະນະປະຈຳສະພາແຫ່ງຊາດ ແຕ່ງຕັ້ງຄະນະສະເພາະກິດຂອງຕົນ ເພື່ອຕິດຕາມກວດກາລະອຽດກ່ຽວກັບບັນຫາໃດໜຶ່ງ ຕາມການສະເໜີຂອງກຳມາທິການສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ.

ມະຕິແຕ່ງຕັ້ງຄະນະສະເພາະກິດ ປະກອບດ້ວຍ:

1. ເນື້ອໃນການຕິດຕາມກວດກາ;

2. ເປົ້າໝາຍການຕິດຕາມກວດກາ;

3. ໂຄງປະກອບບຸກຄະລາກອນ ຊຶ່ງປະກອບດ້ວຍ ສະມາຊິກສະພາແຫ່ງຊາດ ແລະ ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງຈຳນວນໜຶ່ງ;

4. ສິດ ແລະ ໜ້າທີ່ ຊຶ່ງມີ ດັ່ງນີ້:

4.1. ສະເໜີໃຫ້ເປົ້າໝາຍຖືກຕິດຕາມກວດກາ ລາຍງານເປັນລາຍລັກອັກສອນ, ສະໜອງຂໍ້ມູນ, ເອກະສານທີ່ກ່ຽວຂ້ອງກັບເນື້ອໃນການຕິດຕາມກວດກາ, ຊີ້ແຈງ, ອະທິບາຍບັນຫາທີ່ຄະນະສະເພາະກິດມີຄວາມສົນໃຈ;

4.2. ພິຈາລະນາ, ຕີລາຄາບົດລາຍງານ, ຂໍ້ມູນ, ເອກະສານຂອງເປົ້າໝາຍຖືກຕິດຕາມກວດກາ;

4.3. ໃຫ້ຄຳແນະນຳແກ່ເປົ້າໝາຍຖືກຕິດຕາມກວດກາ ກ່ຽວກັບການແກ້ໄຂ ເມື່ອເຫັນວ່າມີການລະເມີດກົດໝາຍ, ກໍ່ຄວາມເສຍຫາຍຕໍ່ ຜົນປະໂຫຍດຂອງຊາດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ;

4.4. ສະເໜີຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາຕົກລົງໃຫ້ເປົ້າໝາຍດັ່ງກ່າວ ຢຸດເຊົາການລະເມີດກົດໝາຍ ແລະ ຟື້ນຟູ ສິດ, ຜົນປະໂຫຍດ ຂອງຊາດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ. ມອບໃຫ້ການຈັດຕັ້ງທີ່ມີ ສິດ, ໜ້າທີ່ ທີ່ກ່ຽວຂ້ອງພິຈາລະນາ ການລົງວິໄນ ແລະ ນຳໃຊ້ມາດຕະການອື່ນຕໍ່ຜູ້ລະເມີດນັ້ນ ຕາມກົດໝາຍ;

4.5. ປະຕິບັດໃຫ້ຖືກຕ້ອງຕາມ ເນື້ອໃນ, ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນມະຕິແຕ່ງຕັ້ງຄະນະສະເພາະກິດຢ່າງເຂັ້ມງວດ;

4.6. ສົ່ງບົດລາຍງານຜົນການຕິດຕາມກວດກາ ໃຫ້ຄະນະປະຈໍາສະພາແຫ່ງຊາດ ພາຍໃນເວລາ ສິບວັນ ນັບແຕ່ວັນສິ້ນສຸດການຕິດຕາມກວດກາເປັນຕົ້ນໄປ.

ມະຕິດັ່ງກ່າວ ຕ້ອງສົ່ງໃຫ້ ເປົ້າໝາຍຖືກຕິດຕາມກວດກາ ແລະ ອົງການທີ່ກ່ຽວຂ້ອງ ເຈັດວັນ ກ່ອນດໍາເນີນການຕິດຕາມກວດກາ.

**ມາດຕາ 38 ການຕິດຕາມກວດກາບົດລາຍງານຂອງຄະນະສະເພາະກິດ**

ກອງປະຊຸມຄະນະປະຈໍາສະພາແຫ່ງຊາດ ຕິດຕາມກວດກາບົດລາຍງານຂອງຄະນະສະເພາະກິດ ຕາມຂັ້ນຕອນ ດັ່ງນີ້:

1. ຫົວໜ້າຄະນະສະເພາະກິດ ລາຍງານ;
2. ເປົ້າໝາຍຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍ;
3. ຕົວແທນຂອງການຈັດຕັ້ງ ຫຼື ບຸກຄົນທີ່ຖືກເຊີນ ປະກອບຄໍາເຫັນ;
4. ຄະນະປະຈໍາສະພາແຫ່ງຊາດ ຄົ້ນຄວ້າ, ມີຄໍາເຫັນ;
5. ເປົ້າໝາຍຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍເພີ່ມເຕີມ;
6. ຄະນະປະຈໍາສະພາແຫ່ງຊາດ ພິຈາລະນາລົງມະຕິຮັບຮອງເອົາບົດລາຍງານຜົນການຕິດຕາມກວດກາ.

**ມາດຕາ 39 ການພິຈາລະນາ ແລະ ແກ້ໄຂ ຜົນການຕິດຕາມກວດກາ**

ຄະນະປະຈໍາສະພາແຫ່ງຊາດ ພິຈາລະນາ ແລະ ແກ້ໄຂຜົນການຕິດຕາມກວດກາ ດັ່ງນີ້:

1. ສະເໜີໃຫ້ການຈັດຕັ້ງ ຫຼື ບຸກຄົນ ທີ່ມີສິດ ແລະ ໜ້າທີ່ ທີ່ກ່ຽວຂ້ອງ ອອກຄໍາສັ່ງໃຫ້ຜູ້ລະເມີດນັ້ນ ຢຸດເຊົາການລະເມີດໂດຍທັນທີ, ໃຫ້ຜູ້ລະເມີດ ຟື້ນຟູ, ຊົດເຊີຍຄ່າເສຍຫາຍ ຕໍ່ຜົນປະໂຫຍດຂອງຊາດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງພົນລະເມືອງ, ລົງວິໄນຕໍ່ຜູ້ລະເມີດ ຫຼື ນໍາໃຊ້ມາດຕະການອື່ນຕາມກົດໝາຍ;

2. ໂຈະການປະຕິບັດນິຕິກໍາຂອງອົງການລັດ ທີ່ຂັດກັບ ລັດຖະທໍາມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ ຫຼື ຄະນະປະຈໍາສະພາແຫ່ງຊາດ ແລ້ວລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ ພິຈາລະນາ ແລະ ຕົກລົງກ່ຽວກັບການຍົກເລີກນິຕິກໍານັ້ນ.

## ໝວດທີ 3
## ການຕິດຕາມກວດກາ ຂອງກໍາມາທິການສະພາແຫ່ງຊາດ

**ມາດຕາ 40 (ປັບປຸງ) ເປົ້າໝາຍຖືກຕິດຕາມກວດກາ ຂອງກໍາມາທິການສະພາແຫ່ງຊາດ**

ກໍາມາທິການສະພາແຫ່ງຊາດ ຕິດຕາມກວດກາເປົ້າໝາຍ ຕາມມະຕິຄະນະປະຈໍາສະພາແຫ່ງຊາດ ດັ່ງນີ້:

1. ກະຊວງ, ອົງການລັດທຽບເທົ່າກະຊວງ;
2. ອົງການໄອຍະການປະຊາຊົນ;
3. ສານປະຊາຊົນ;
4. ອົງການກວດກາລັດ;
5. ອົງການກວດສອບແຫ່ງລັດ.

**ມາດຕາ 41 (ປັບປຸງ) ເນື້ອໃນການຕິດຕາມກວດກາຂອງກຳມາທິການສະພາແຫ່ງຊາດ**

ກຳມາທິການສະພາແຫ່ງຊາດ ຕິດຕາມກວດກາຕາມເນື້ອໃນ ດັ່ງນີ້:

1. ບົດລາຍງານ ການຈັດຕັ້ງ ແລະ ເຄື່ອນໄຫວຂອງ ບັນດາເປົ້າໝາຍຖືກຕິດຕາມກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 40 ຂອງກົດໝາຍສະບັບນີ້;

2. ນິຕິກຳຂອງ ການຈັດຕັ້ງ ຫຼື ບຸກຄະລາກອນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 40 ຂອງກົດໝາຍສະບັບນີ້ທີ່ເຫັນວ່າຂັດກັບ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ, ຍົກເວັ້ນຄຳຕັດສິນ ກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;

3. ບົດລາຍງານຂອງໜ່ວຍສະເພາະກິດ;

4. ການໃຫ້ຄວາມກະຈ່າງແຈ້ງ ຂອງເປົ້າໝາຍຖືກຕິດຕາມກວດກາ.

**ມາດຕາ 42 ການສ້າງແຜນການຕິດຕາມກວດກາຂອງກຳມາທິການສະພາແຫ່ງຊາດ**

ກຳມາທິການສະພາແຫ່ງຊາດ ສ້າງແຜນການຕິດຕາມກວດກາຂອງຕົນ ເປັນແຕ່ລະໄລຍະໂດຍອີງຕາມແຜນການຕິດຕາມກວດກາຂອງກອງປະຊຸມສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ແລະ ການສະເໜີຂອງກຳມະການສັງກັດກຳມາທິການ. ຫຼັງຈາກແຜນການໄດ້ຖືກຮັບຮອງເອົາແລ້ວ ກຳມາທິການສະພາແຫ່ງຊາດ ຕ້ອງແບ່ງຄວາມຮັບຜິດຊອບໃຫ້ກຳມະການສັງກັດກຳມາທິການຂອງຕົນ ເພື່ອຈັດຕັ້ງປະຕິບັດ.

**ມາດຕາ 43 (ປັບປຸງ) ການຕິດຕາມກວດກາບົດລາຍງານໃນກອງປະຊຸມກຳມາທິການ**

ກອງປະຊຸມກຳມາທິການສະພາແຫ່ງຊາດ ຕິດຕາມກວດກາບົດລາຍງານ ການຈັດຕັ້ງ ແລະ ເຄື່ອນໄຫວຂອງເປົ້າໝາຍຖືກຕິດຕາມກວດກາ ຕາມຂັ້ນຕອນ ດັ່ງນີ້:

1. ການຈັດຕັ້ງ ຫຼື ບຸກຄະລາກອນ ທີ່ກ່ຽວຂ້ອງ ລາຍງານ;

2. ປະທານກຳມາທິການ ມີຄຳເຫັນ;

3. ກຳມາທິການ ຄົ້ນຄວ້າ, ປະກອບຄຳເຫັນ;

4. ຜູ້ລາຍງານ ຊີ້ແຈງ, ອະທິບາຍ ແລະ ໃຫ້ຄວາມກະຈ່າງແຈ້ງ;

5. ການລົງມະຕິຮັບຮອງເອົາບົດລາຍງານ.

ໃນກໍລະນີ ຫາກເຫັນວ່າເນື້ອໃນບົດລາຍງານດັ່ງກ່າວ ມີການລະເມີດກົດໝາຍນັ້ນ ກຳມາທິການສະພາແຫ່ງຊາດ ມີສິດສະເໜີໃຫ້ອົງການທີ່ກ່ຽວຂ້ອງແກ້ໄຂ ແລະ ແຈ້ງໃຫ້ກຳມາທິການສະພາແຫ່ງຊາດ ພາຍໃນເວລາສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ. ຖ້າຫາກບໍ່ມີການແກ້ໄຂ ຫຼື ແກ້ໄຂບໍ່ເໝາະສົມ ກໍໃຫ້ລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ.

**ມາດຕາ 44 (ປັບປຸງ) ການຕິດຕາມກວດການິຕິກຳໃນກອງປະຊຸມກຳມາທິການ**

ກອງປະຊຸມກຳມາທິການສະພາແຫ່ງຊາດ ຕິດຕາມກວດການິຕິກຳ ຕາມຂັ້ນຕອນ ດັ່ງນີ້:

1. ຜູ້ອອກນິຕິກຳ ລາຍງານ, ຊີ້ແຈງ, ອະທິບາຍ;

2. ປະທານກຳມາທິການ ມີຄຳເຫັນ;

3. ຜູ້ເຂົ້າຮ່ວມກອງປະຊຸມ ຄົ້ນຄວ້າ, ປະກອບຄຳເຫັນ;

4. ຜູ້ອອກນິຕິກຳ ຊີ້ແຈງ, ອະທິບາຍ ເພີ່ມເຕີມ;

5. ການລົງມະຕິຮັບຮອງເອົາຜົນການຕິດຕາມກວດກາ.

ໃນກໍລະນີ ເຫັນວ່ານິຕິກຳດັ່ງກ່າວ ຫາກຂັດກັບກົດໝາຍທີ່ກ່ຽວຂ້ອງນັ້ນ ກຳມາທິການສະພາແຫ່ງຊາດ ມີສິດສະເໜີໃຫ້ອົງການທີ່ກ່ຽວຂ້ອງແກ້ໄຂ ແລະ ແຈ້ງໃຫ້ກຳມາທິການສະພາແຫ່ງຊາດ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳເໜີເປັນຕົ້ນໄປ. ຖ້າຫາກບໍ່ມີການແກ້ໄຂ ຫຼື ແກ້ໄຂບໍ່ເໝາະສົມ ກໍໃຫ້ລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ.

**ມາດຕາ 45 ການແຕ່ງຕັ້ງໜ່ວຍສະເພາະກິດ**

ເມື່ອມີຄວາມຈຳເປັນ ຫຼື ຕາມການມອບໝາຍຂອງ ຄະນະປະຈຳສະພາແຫ່ງຊາດນັ້ນ ກຳມາທິການ ສະພາແຫ່ງຊາດ ອອກຂໍ້ຕົກລົງແຕ່ງຕັ້ງໜ່ວຍສະເພາະກິດ ເພື່ອຕິດຕາມກວດກາລະອຽດກ່ຽວກັບບັນຫາໃດໜຶ່ງ. ສຳລັບໂຄງປະກອບຂອງຂໍ້ຕົກລົງ ໃຫ້ປະຕິບັດຄືກັນກັບໂຄງປະກອບຂອງມະຕິແຕ່ງຕັ້ງຄະນະສະເພາະກິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 37 ຂອງກົດໝາຍສະບັບນີ້.

**ມາດຕາ 46 (ປັບປຸງ) ການຕິດຕາມກວດກາບົດລາຍງານຂອງໜ່ວຍສະເພາະກິດ**

ກອງປະຊຸມກຳມາທິການສະພາແຫ່ງຊາດ ຕິດຕາມກວດກາບົດລາຍງານຂອງໜ່ວຍສະເພາະກິດ ຕາມຂັ້ນຕອນດັ່ງນີ້:

1. ຫົວໜ້າໜ່ວຍສະເພາະກິດ ລາຍງານ;
2. ເປົ້າໝາຍຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍ;
3. ກອງປະຊຸມ ຄົ້ນຄວ້າ, ປະກອບຄຳເຫັນ;
4. ເປົ້າໝາຍຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍ ເພີ່ມເຕີມ;
5. ປະທານກອງປະຊຸມສະຫຼຸບ, ຫຼັງຈາກນັ້ນກຳມະການສັງກັດກຳມາທິການ ທີ່ເຂົ້າຮ່ວມກອງປະຊຸມລົງມະຕິຮັບຮອງເອົາບົດລາຍງານຜົນການຕິດຕາມກວດກາ;
6. ກຳມາທິການ ລາຍງານຜົນຂອງກອງປະຊຸມ ຕໍ່ ຄະນະປະຈຳສະພາແຫ່ງຊາດ ພ້ອມທັງແຈ້ງໃຫ້ການຈັດຕັ້ງ ແລະ ບຸກຄົນທີ່ກ່ຽວຂ້ອງ ຮັບຊາບ.

**ມາດຕາ 47 (ປັບປຸງ) ການພິຈາລະນາ ແລະ ແກ້ໄຂຜົນການຕິດຕາມກວດກາຂອງໜ່ວຍສະເພາະກິດ**

ກຳມາທິການສະພາແຫ່ງຊາດ ພິຈາລະນາ ແລະ ແກ້ໄຂ ຜົນການຕິດຕາມກວດກາຂອງໜ່ວຍສະເພາະກິດ ດ້ວຍການສະເໜີໃຫ້ການຈັດຕັ້ງ ຫຼື ບຸກຄົນ ທີ່ມີ ສິດ ແລະ ໜ້າທີ່ ທີ່ກ່ຽວຂ້ອງ ອອກຄຳສັ່ງໂຈະການຈັດຕັ້ງປະຕິບັດນິຕິກຳທີ່ບໍ່ຖືກຕ້ອງ ແລະ ຢຸດເຊົາການກະທຳທີ່ເປັນການລະເມີດກົດໝາຍ, ລະບຽບການ ແລະ ລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ເພື່ອມີມາດຕະການ ແລະ ວິທີການແກ້ໄຂ ເປັນຕົ້ນ ການພິຈາລະນາຍົກເລີກນິຕິກຳນັ້ນ.

**ມາດຕາ 48 (ໃໝ່) ການຕິດຕາມກວດກາການໃຫ້ຄວາມກະຈ່າງແຈ້ງໃນກອງປະຊຸມກຳມາທິການ**

ກອງປະຊຸມກຳມາທິການສະພາແຫ່ງຊາດ ຕິດຕາມກວດກາການໃຫ້ຄວາມກະຈ່າງແຈ້ງຂອງເປົ້າໝາຍຖືກຕິດຕາມກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 40 ຂອງກົດໝາຍສະບັບນີ້ ຕໍ່ບັນຫາໃດໜຶ່ງທີ່ກຳມາທິການສະພາແຫ່ງ

ຊາດ ຊັກຖາມ ໂດຍໃຫ້ເປົ້າໝາຍຖືກຕິດຕາມກວດກາ ລາຍງານ, ຊີ້ແຈງ ໃຫ້ຄວາມກະຈ່າງແຈ້ງຕໍ່ບັນຫານັ້ນ ໃຫ້ມີຄວາມຖືກຕ້ອງຕາມກົດໝາຍ ແລະ ສອດຄ່ອງກັບຄວາມເປັນຈິງ.

ການຕິດຕາມກວດກາການໃຫ້ຄວາມກະຈ່າງແຈ້ງ ຂອງກອງປະຊຸມກຳມາທິການ ໃຫ້ປະຕິບັດຕາມຂັ້ນຕອນດັ່ງນີ້:

1. ເປົ້າໝາຍຖືກຕິດຕາມກວດກາ ລາຍງານໃຫ້ຄວາມກະຈ່າງແຈ້ງ ຕໍ່ຂໍ້ຊັກຖາມ;

2. ກຳມາທິການ ຄົ້ນຄວ້າ, ປະກອບຄຳເຫັນ ແລະ ຊັກຖາມ

3. ເປົ້າໝາຍຖືກຕິດຕາມກວດກາ ຊີ້ແຈງເພີ່ມເຕີມ;

4. ປະທານກອງປະຊຸມສັງລວມ.

## ໝວດທີ 4
## ການຕິດຕາມກວດກາຂອງ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ

**ມາດຕາ 49 (ປັບປຸງ) ການຕິດຕາມກວດກາຂອງ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ**

ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ຕິດຕາມກວດກາຕາມແຜນການຕິດຕາມກວດກາຂອງສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ກຳມາທິການຂອງສະພາແຫ່ງຊາດ ແລະ ບັນຫາໃດໜຶ່ງຕາມການສະເໜີຂອງສະມາຊິກສະພາແຫ່ງຊາດ.

**ມາດຕາ 50 (ໃໝ່) ສິດ ແລະ ໜ້າທີ່ ໃນການຕິດຕາມກວດກາ ຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ**

ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຂົ້າຮ່ວມໃນການຕິດຕາມກວດກາ ກັບ ຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການສະພາແຫ່ງຊາດ, ຄະນະສະເພາະກິດ ຫຼື ໜ່ວຍສະເພາະກິດ;

2. ຕິດຕາມກວດກາການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ໂຄງການລົງທຶນຂອງລັດຖະບານ ທີ່ຢູ່ທ້ອງຖິ່ນຂອງຕົນ;

3. ຕິດຕາມກວດກາບັນດາອົງການລັດຂັ້ນທ້ອງຖິ່ນຂອງຕົນ ໃນການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ, ມະຕິຄະນະປະຈຳສະພາແຫ່ງຊາດ, ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ, ມະຕິຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ບັນດານິຕິກຳໃຕ້ກົດໝາຍ ຂອງສູນກາງ ແລະ ທ້ອງຖິ່ນ;

4. ຕິດຕາມກວດການິຕິກຳ ແລະ ການຈັດຕັ້ງປະຕິບັດວຽກງານຂອງອົງການປົກຄອງທ້ອງຖິ່ນ ເພື່ອໃຫ້ສອດຄ່ອງກັບ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ; ລາຍຮັບ-ລາຍຈ່າຍງົບປະມານຂັ້ນທ້ອງຖິ່ນ, ການຈັດຕັ້ງປະຕິບັດວຽກງານທາງດ້ານການເມືອງ ແລະ ການປົກຄອງ, ເສດຖະກິດ-ສັງຄົມ, ການຈັດຕັ້ງ ແລະ ບຸກຄະລາກອນ ທີ່ສະພາປະຊາຊົນຂັ້ນແຂວງຮັບຮອງເອົາ;

5. ເຂົ້າຮ່ວມກັບຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃນການຕິດຕາມກວດກາ ການພິຈາລະນາ ແລະ ແກ້ໄຂ ຄຳຮ້ອງທຸກ;

6. ລາຍງານຜົນການ ຕິດຕາມກວດກາ ຕໍ່ ຄະນະປະຈຳສະພາແຫ່ງຊາດ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງ ສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ.

## ໝວດທີ 5
## ການຕິດຕາມກວດກາ ຂອງສະມາຊິກສະພາແຫ່ງຊາດ

### ມາດຕາ 51 (ປັບປຸງ) ການຕິດຕາມກວດກາ ຂອງສະມາຊິກສະພາແຫ່ງຊາດ

ສະມາຊິກສະພາແຫ່ງຊາດຕິດຕາມກວດກາ ຕາມເນື້ອໃນ ດັ່ງນີ້:

1. ບົດລາຍງານຂອງພາກສ່ວນຕ່າງໆໃນກອງປະຊຸມ;
2. ການຊັກຖາມເປົ້າໝາຍຖືກຕິດຕາມກວດກາ;
3. ນິຕິກຳຂອງອົງການລັດ, ຍົກເວັ້ນຄຳຕັດສິນກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;
4. ການແກ້ໄຂຄຳຮ້ອງທຸກ;
5. ລາຍງານຜົນການຕິດຕາມກວດກາ.

### ມາດຕາ 52 (ປັບປຸງ) ການສ້າງ ແລະ ປະຕິບັດແຜນການຕິດຕາມກວດກາ

ສະມາຊິກສະພາແຫ່ງຊາດ ສ້າງແຜນການ, ຕາຕະລາງ ການເຄື່ອນໄຫວວຽກງານຕິດຕາມກວດກາຂອງຕົນ ໂດຍອີງຕາມແຜນການຂອງ ກອງປະຊຸມສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ກຳມາທິການສະພາແຫ່ງຊາດ ແລະ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ.

ນອກຈາກດຳເນີນການຕິດຕາມກວດກາດ້ວຍຕົນເອງແລ້ວ ສະມາຊິກສະພາແຫ່ງຊາດ ຍັງມີ ສິດ ແລະ ໜ້າທີ່ເຂົ້າຮ່ວມການເຄື່ອນໄຫວຕິດຕາມກວດກາຂອງ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ກຳມາທິການສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມສະພາແຫ່ງຊາດ.

ສຳລັບສະມາຊິກສະພາແຫ່ງຊາດ ທີ່ຄອບຕຳແໜ່ງ ໃຫ້ແບ່ງເວລາເຄື່ອນໄຫວວຽກງານຕິດຕາມກວດກາ ຕາມແຜນການ.

### ມາດຕາ 53 (ປັບປຸງ) ການຕິດຕາມກວດກາບົດລາຍງານ

ສະມາຊິກສະພາແຫ່ງຊາດ ຕິດຕາມກວດກາບົດລາຍງານຂອງພາກສ່ວນຕ່າງໆ ດ້ວຍການ ເຂົ້າຮ່ວມການຄົ້ນຄວ້າ, ປະກອບຄຳເຫັນ, ພິຈາລະນາ ໃນກອງປະຊຸມສະພາແຫ່ງຊາດ, ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄົບຄະນະຂອງກຳມາທິການ.

### ມາດຕາ 54 (ປັບປຸງ) ການຊັກຖາມໃນກອງປະຊຸມສະພາແຫ່ງຊາດ

ໃນກອງປະຊຸມສະພາແຫ່ງຊາດ ສະມາຊິກສະພາແຫ່ງຊາດ ຊັກຖາມ ຄະນະປະຈຳ, ປະທານ, ຮອງປະທານກຳມາທິການ ແລະ ເລຂາທິການ ສະພາແຫ່ງຊາດ, ນາຍົກລັດຖະມົນຕີ, ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າ

ກະຊວງ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານ ສານປະຊາຊົນສູງສຸດ, ອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ.

ຄຳຊັກຖາມ ຕ້ອງກະທັດຮັດ, ຈະແຈ້ງ, ມີບ່ອນອີງ ແລະ ຕ້ອງຕິດພັນກັບ ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ຖືກຊັກຖາມ, ອາດຊັກຖາມກັບທີ່ ຫຼື ເປັນລາຍລັກອັກສອນ.

ຜູ້ຖືກຊັກຖາມນັ້ນ ຕ້ອງຕອບໃຫ້ ຈະແຈ້ງ, ກະທັດຮັດ ແລະ ຖືກກັບຄຳຊັກຖາມ. ໃນກໍລະນີບໍ່ສາມາດຕອບກັບທີ່ໄດ້ ໃຫ້ຕອບເປັນລາຍລັກອັກສອນ ແລ້ວສົ່ງໃຫ້ຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 55 (ປັບປຸງ) ການຕິດຕາມກວດການິຕິກຳໃນກອງປະຊຸມ**

ສະມາຊິກສະພາແຫ່ງຊາດ ເຂົ້າຮ່ວມຄົ້ນຄວ້າ, ປະກອບຄຳເຫັນ ແລະ ພິຈາລະນານິຕິກຳຂອງອົງການລັດໃນກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄົບຄະນະຂອງກຳມາທິການສະພາແຫ່ງຊາດ ແລະ ກອງປະຊຸມຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ.

**ມາດຕາ 56 (ປັບປຸງ) ການຕິດຕາມກວດກາ ການແກ້ໄຂຄຳຮ້ອງທຸກ**

ສະມາຊິກສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ຮັບຕ້ອນ ແລະ ໃຫ້ຄຳປຶກສາແກ່ປະຊາຊົນ, ຮັບຄຳຮ້ອງທຸກຂອງພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເພື່ອສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ພິຈາລະນາ, ແກ້ໄຂ ແລະ ຕິດຕາມກວດກາຜົນການແກ້ໄຂຄຳຮ້ອງທຸກດັ່ງກ່າວ.

ສຳລັບ ກົນໄກ, ຂັ້ນຕອນ ການຕິດຕາມກວດກາການແກ້ໄຂຄຳຮ້ອງທຸກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 57 (ປັບປຸງ) ການລາຍງານຜົນການຕິດຕາມກວດກາ**

ພາຍຫຼັງໄດ້ເຄື່ອນໄຫວຕິດຕາມກວດກາແລ້ວ ສະມາຊິກສະພາແຫ່ງຊາດ ຕ້ອງລາຍງານຜົນການຕິດຕາມກວດການັ້ນ ຕໍ່ຄະນະປະຈຳສະພາແຫ່ງຊາດ, ກຳມາທິການສະພາແຫ່ງຊາດທີ່ຕົນສັງກັດ ແລະ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ເປັນລາຍລັກອັກສອນ.

## ພາກທີ IV
## ການຕິດຕາມກວດກາຂອງສະພາປະຊາຊົນຂັ້ນແຂວງ

**ມາດຕາ 58 (ປັບປຸງ) ການຕິດຕາມກວດກາ ຂອງສະພາປະຊາຊົນຂັ້ນແຂວງ**

ສະພາປະຊາຊົນຂັ້ນແຂວງ ດຳເນີນການຕິດຕາມກວດກາ ໂດຍ:

1. ກອງປະຊຸມສະພາປະຊາຊົນຂັ້ນແຂວງ;
2. ຄະນະປະຈຳສະພາປະຊາຊົນຂັ້ນແຂວງ;
3. ຄະນະກຳມະການສະພາປະຊາຊົນຂັ້ນແຂວງ;
4. ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງຂັ້ນເມືອງ;
5. ສະມາຊິກສະພາປະຊາຊົນຂັ້ນແຂວງ.

ໃນການຕິດຕາມກວດກາ ເມື່ອມີຄວາມຈຳເປັນ ອາດແຕ່ງຕັ້ງ ຄະນະກຳມະການກວດກາຊົ່ວຄາວ, ຄະນະສະເພາະກິດ ແລະ ໜ່ວຍສະເພາະກິດ ຕາມແຕ່ລະກໍລະນີ.

## ໝວດທີ 1
## ການຕິດຕາມກວດກາຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ

**ມາດຕາ 59 (ປັບປຸງ) ການຕິດຕາມກວດກາຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ**

ການຕິດຕາມກວດກາຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ ແມ່ນ ການຕິດຕາມກວດກາ ບົນພື້ນຖານການເຄື່ອນໄຫວຕິດຕາມກວດກາຂອງ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຄະນະກຳມະການສະພາປະຊາຊົນຂັ້ນແຂວງ, ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງຂັ້ນເມືອງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ.

**ມາດຕາ 60 (ປັບປຸງ) ເປົ້າໝາຍຖືກຕິດຕາມກວດກາ ຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ**

ເປົ້າໝາຍຖືກຕິດຕາມກວດກາຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ ມີ ດັ່ງນີ້:

1. ປະທານ ແລະ ຮອງປະທານ ສະພາປະຊາຊົນຂັ້ນແຂວງ;
2. ກຳມະການຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ;
3. ປະທານ, ຮອງປະທານ ຄະນະກຳມະການ ແລະ ເລຂາທິການ ສະພາປະຊາຊົນຂັ້ນແຂວງ;
4. ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ;
5. ຫົວໜ້າອົງການໄອຍະການປະຊາຊົນທ້ອງຖິ່ນ;
6. ປະທານສານປະຊາຊົນທ້ອງຖິ່ນ;
7. ປະທານອົງການກວດກາລັດ ຂັ້ນແຂວງ;
8. ປະທານອົງການກວດສອບປະຈຳພາກ.

**ມາດຕາ 61 (ປັບປຸງ) ແຜນການຕິດຕາມກວດກາຂອງສະພາປະຊາຊົນຂັ້ນແຂວງ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຜູ້ສ້າງແຜນການຕິດຕາມກວດກາ ຂອງສະພາປະຊາຊົນຂັ້ນແຂວງ ແລ້ວສະເໜີຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ເພື່ອພິຈາລະນາຮັບຮອງເອົາ. ໃນກໍລະນີຈຳເປັນຮີບດ່ວນ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຈະຕົກລົງໃຫ້ດຳເນີນການຕິດຕາມກວດການອກແຜນການກໍໄດ້ ແລ້ວລາຍງານຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ເພື່ອຖືກໄປ.

**ມາດຕາ 62 (ປັບປຸງ) ເນື້ອໃນການຕິດຕາມກວດກາ ຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ເຄື່ອນໄຫວຕິດຕາມກວດກາ ຕາມເນື້ອໃນ ດັ່ງນີ້:

1. ບົດລາຍງານຂອງ ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກ ຂັ້ນແຂວງ, ຫົວໜ້າອົງການໄອຍະການປະຊາຊົນທ້ອງຖິ່ນ, ປະທານສານປະຊາຊົນທ້ອງຖິ່ນ, ປະທານອົງການກວດກາລັດຂັ້ນແຂວງ ແລະ ປະທານອົງການກວດສອບປະຈໍາພາກ;

2. ນິຕິກໍາຂອງ ບັນດາເປົ້າໝາຍຖືກຕິດຕາມກວດກາ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 60 ຂອງກົດໝາຍສະບັບນີ້ ທີ່ເຫັນວ່າຂັດກັບ ລັດຖະທໍາມະນູນ, ກົດໝາຍ ຫຼື ມະຕິກອງປະຊຸມ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ຍົກເວັ້ນຄໍາຕັດສິນ ກ່ຽວກັບການດໍາເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;

3. ການຊັກຖາມ ແລະ ການຕອບຄໍາຊັກຖາມ ຂອງບັນດາເປົ້າໝາຍຖືກຕິດຕາມກວດກາ;

4. ການແກ້ໄຂຄໍາຮ້ອງທຸກ;

5. ບົດລາຍງານຂອງຄະນະກໍາມະການກວດກາຊົ່ວຄາວ.

**ມາດຕາ 63 (ປັບປຸງ) ການຕິດຕາມກວດກາບົດລາຍງານ ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາບົດລາຍງານຂອງເປົ້າໝາຍຖືກຕິດຕາມກວດກາ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 60 ຂອງກົດໝາຍສະບັບນີ້.

ບົດລາຍງານດັ່ງກ່າວ ຕ້ອງໄດ້ຜ່ານການຄົ້ນຄວ້າ, ພິຈາລະນາຂອງຄະນະກໍາມະການທີ່ກ່ຽວຂ້ອງ ຂອງສະພາປະຊາຊົນຂັ້ນແຂວງ ຕາມການມອບໝາຍຂອງຄະນະປະຈໍາສະພາປະຊາຊົນຂັ້ນແຂວງ, ຍົກເວັ້ນ ບົດລາຍງານຂອງຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ.

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາ ບົດລາຍງານຕາມຂັ້ນຕອນ ດັ່ງນີ້:

1. ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຫົວໜ້າອົງການໄອຍະການປະຊາຊົນທ້ອງຖິ່ນ, ປະທານສານປະຊາຊົນທ້ອງຖິ່ນ, ປະທານອົງການກວດກາລັດຂັ້ນແຂວງ ແລະ ປະທານອົງການກວດສອບປະຈໍາພາກ ລາຍງານ;

2. ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ຫຼື ປະທານຄະນະກໍາມະການຂອງສະພາປະຊາຊົນຂັ້ນແຂວງ ທີ່ຖືກມອບໝາຍປະກອບຄໍາເຫັນຕໍ່ບົດລາຍງານ;

3. ສະມາຊິກສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າ, ປະກອບຄໍາເຫັນ ແລະ ຊັກຖາມ;

4. ຜູ້ລາຍງານ ຊີ້ແຈງ ແລະ ຕອບຄໍາຊັກຖາມ.

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ອາດສະເໜີໃຫ້ເປົ້າໝາຍຖືກຕິດຕາມກວດກາ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 60 ຂອງກົດໝາຍສະບັບນີ້ ມາໃຫ້ຄວາມກະຈ່າງແຈ້ງກ່ຽວກັບບັນຫາໃດໜຶ່ງສະເພາະ ເມື່ອເຫັນວ່າມີຄວາມຈໍາເປັນ.

**ມາດຕາ 64 (ປັບປຸງ) ການຕິດຕາມກວດການິຕິກຳ ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຕິດຕາມກວດການິຕິກຳຂອງ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ອົງການປົກຄອງແຂວງ, ນະຄອນຫຼວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຫົວໜ້າອົງການໄອຍະການປະຊາຊົນທ້ອງຖິ່ນ, ປະທານສານປະຊາຊົນທ້ອງຖິ່ນ, ປະທານອົງການກວດກາລັດຂັ້ນແຂວງ ແລະ ປະທານອົງການກວດສອບປະຈຳພາກ ທີ່ຂັດກັບ ລັດຖະທຳມະນູນ, ກົດໝາຍ ຫຼື ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ ຕາມການສະເໜີ ຂອງ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຫຼື ມີການສະເໜີຢ່າງໜ້ອຍ ໜຶ່ງສ່ວນສີ່ ຂອງຈຳນວນສະມາຊິກສະພາປະຊາຊົນຂັ້ນແຂວງ ທັງໝົດ.

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຕິດຕາມກວດການິຕິກຳ ຕາມຂັ້ນຕອນ ດັ່ງນີ້:

1. ປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ ລາຍງານ;
2. ສະມາຊິກສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າ, ປະກອບຄຳເຫັນ;
3. ຜູ້ອອກນິຕິກຳ ຊີ້ແຈງ, ອະທິບາຍ;
4. ການລົງມະຕິຮັບຮອງເອົາການຍົກເລີກນິຕິກຳນັ້ນ ເປັນບາງ ເນື້ອໃນ, ມາດຕາ ຫຼື ທັງໝົດ.

**ມາດຕາ 65 (ປັບປຸງ) ການຕິດຕາມກວດກາຜ່ານການຊັກຖາມ ແລະ ການຕອບຄຳຊັກຖາມ ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ**

ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ ການຊັກຖາມ ແລະ ການຕອບຄຳຊັກຖາມ ໃຫ້ປະຕິບັດ ດັ່ງນີ້:

ກ. ການຊັກຖາມ:

1. ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ສັງລວມຄຳຊັກຖາມຈາກຜົນການຕິດຕາມກວດກາ ຂອງບັນດາຄະນະກຳມະການ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ທີ່ເປັນບັນຫາ ພົ້ນເດັ່ນ, ພື້ນຖານສຳຄັນຂອງທ້ອງຖິ່ນ ແລ້ວສົ່ງຄຳຊັກຖາມ ໃຫ້ເປົ້າໝາຍຖືກຊັກຖາມ ພາຍໃນເວລາ ສິບຫ້າວັນ ລັດຖະການ ກ່ອນການດຳເນີນກອງປະຊຸມ;

2. ສະມາຊິກສະພາປະຊາຊົນຂັ້ນແຂວງ ຊັກຖາມເປົ້າໝາຍທີ່ກ່ຽວຂ້ອງ.

ຂ. ການຕອບຄຳຊັກຖາມ:

1. ຜູ້ຖືກຊັກຖາມ ຕອບຄຳຊັກຖາມ ຕາມຄຳຊັກຖາມ ທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ສົ່ງໃຫ້;
2. ຜູ້ຖືກຊັກຖາມ ຕອບຄຳຊັກຖາມ ທີ່ສະມາຊິກສະພາປະຊາຊົນຂັ້ນແຂວງ ຊັກຖາມຕື່ມ;

ຜູ້ຖືກຊັກຖາມ ຕ້ອງຕອບຄຳຊັກຖາມ ໃຫ້ຖືກຕ້ອງ, ຊັດເຈນ.

ຫຼັງຈາກຟັງການຕອບຄຳຊັກຖາມແລ້ວ ຖ້າສະມາຊິກສະພາປະຊາຊົນຂັ້ນແຂວງ ຫາກບໍ່ເຫັນດີນຳຄຳຕອບນັ້ນ ກໍສະເໜີໃຫ້ຜູ້ຖືກຊັກຖາມ ຊີ້ແຈງຕໍ່ກອງປະຊຸມຕື່ມ. ຖ້າເຫັນວ່າຈຳເປັນ ປະທານກອງປະຊຸມ ກໍສະເໜີໃຫ້ກອງປະຊຸມລົງມະຕິຕໍ່ການຕອບຄຳຊັກຖາມ ດັ່ງກ່າວ.

**ມາດຕາ 66 (ປັບປຸງ) ການຕິດຕາມກວດກາ ການແກ້ໄຂຄຳຮ້ອງທຸກ ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາ ການແກ້ໄຂຄຳຮ້ອງທຸກຂອງ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໂດຍຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ອົງການປົກຄອງຂັ້ນແຂວງ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ຂັ້ນແຂວງ.

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາການແກ້ໄຂຄຳຮ້ອງທຸກ ຕາມຂັ້ນຕອນ ດັ່ງນີ້:

1. ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ລາຍງານ;

2. ສະມາຊິກສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າ, ປະກອບຄຳເຫັນ;

3. ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຊີ້ແຈງ, ອະທິບາຍ;

4. ການລົງມະຕິຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

**ມາດຕາ 67 (ປັບປຸງ) ການແຕ່ງຕັ້ງຄະນະກຳມະການກວດກາຊົ່ວຄາວ**

ປະທານສະພາປະຊາຊົນຂັ້ນແຂວງ ແຕ່ງຕັ້ງຄະນະກຳມະການກວດກາຊົ່ວຄາວ ຂອງສະພາປະຊາຊົນຂັ້ນແຂວງ ຕາມການຕົກລົງຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ ເພື່ອຕິດຕາມກວດກາລະອຽດກ່ຽວກັບບັນຫາໃດໜຶ່ງ ທີ່ເຫັນວ່າມີຄວາມຈຳເປັນ ຕາມການສະເໜີຂອງ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຄະນະກຳມະການສະພາປະຊາຊົນຂັ້ນແຂວງ, ສະມາຊິກສະພາປະຊາຊົນຂັ້ນແຂວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ຂັ້ນແຂວງ.

ຄະນະກຳມະການກວດກາຊົ່ວຄາວ ປະກອບດ້ວຍ ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງຈຳນວນໜຶ່ງ ຊຶ່ງມີ ສິດ ແລະ ໜ້າທີ່ ດັ່ງດຽວກັນກັບຄະນະສະເພາະກິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 79 ຂອງກົດໝາຍສະບັບນີ້. ຄະນະດັ່ງກ່າວ ຈະຖືກຍຸບເລີກໄປໃນຕົວ ພາຍຫຼັງໄດ້ສຳເລັດການປະຕິບັດໜ້າທີ່.

ມະຕິແຕ່ງຕັ້ງຄະນະກຳມະການກວດກາຊົ່ວຄາວ ຕ້ອງສົ່ງໃຫ້ເປົ້າໝາຍຖືກຕິດຕາມກວດກາ ແລະ ອົງການທີ່ກ່ຽວຂ້ອງ ເຈັດວັນ ກ່ອນດຳເນີນການຕິດຕາມກວດກາ.

**ມາດຕາ 68 (ປັບປຸງ) ການຕິດຕາມກວດກາບົດລາຍງານ ຂອງຄະນະກຳມະການກວດກາຊົ່ວຄາວ**

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາບົດລາຍງານ ຂອງຄະນະກຳມະການກວດກາຊົ່ວຄາວ ຕາມຂັ້ນຕອນ ດັ່ງນີ້:

1. ຫົວໜ້າຄະນະກຳມະການກວດກາຊົ່ວຄາວ ລາຍງານຜົນການຕິດຕາມກວດກາ;

2. ຜູ້ຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍ;

3. ສະມາຊິກສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າ, ປະກອບຄຳເຫັນ;

4. ຜູ້ຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍ ເພີ່ມເຕີມ;

5. ການລົງມະຕິຮັບຮອງເອົາບົດລາຍງານຜົນການຕິດຕາມກວດກາ.

**ມາດຕາ 69 (ປັບປຸງ) ການໃຫ້ຄະແນນໄວ້ວາງໃຈ, ການລົງມະຕິບໍ່ໄວ້ວາງໃຈ ແລະ ການປົດຕຳແໜ່ງ**

ການໃຫ້ຄະແນນໄວ້ວາງໃຈ, ການລົງມະຕິບໍ່ໄວ້ວາງໃຈ ແລະ ການປົດຕຳແໜ່ງ ມີ ດັ່ງນີ້:

ກ. ການໃຫ້ຄະແນນໄວ້ວາງໃຈ

ການໃຫ້ຄະແນນໄວ້ວາງໃຈ ແມ່ນ ການປະເມີນຜົນການປະຕິບັດໜ້າທີ່ວຽກງານ ຕໍ່ບຸກຄະລາກອນ ທີ່ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ຫຼື ຮັບຮອງເອົາການສະເໜີແຕ່ງຕັ້ງ ໂດຍສະມາຊິກສະພາປະຊາຊົນຂັ້ນແຂວງ.

ການໃຫ້ຄະແນນ ດຳເນີນ ແບບປິດລັບ, ໂດຍກົງ, ພາວະວິໄສ, ຍຸຕິທຳ, ບໍ່ອະຄະຕິ;

ຂ. ການລົງມະຕິບໍ່ໄວ້ວາງໃຈ

ການລົງມະຕິບໍ່ໄວ້ວາງໃຈ ແມ່ນ ການລົງຄະແນນສຽງຂອງສະມາຊິກສະພາປະຊາຊົນຂັ້ນແຂວງ ຕໍ່ເປົ້າໝາຍຖືກຕິດຕາມກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 60 ຂອງກົດໝາຍສະບັບນີ້ ທີ່ສ້າງຄວາມເສຍຫາຍແກ່ຜົນປະໂຫຍດຂອງປະເທດຊາດ ແລະ ປະຊາຊົນ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຫຼື ມີການສະເໜີຢ່າງໜ້ອຍ ໜຶ່ງສ່ວນສີ່ ຂອງຈຳນວນສະມາຊິກສະພາປະຊາຊົນຂັ້ນແຂວງ ທັງໝົດ.

ຄ. ການປົດຕຳແໜ່ງ

ການປົດຕຳແໜ່ງ ແມ່ນ ການລົງຄະແນນສຽງຂອງສະມາຊິກສະພາປະຊາຊົນຂັ້ນແຂວງ ຕໍ່ບຸກຄະລາກອນທີ່ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ຫຼື ຮັບຮອງເອົາການສະເໜີແຕ່ງຕັ້ງ ທີ່ສ້າງຄວາມເສຍຫາຍຕໍ່ຜົນປະໂຫຍດຂອງປະເທດຊາດ ແລະ ປະຊາຊົນ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຫຼື ມີການສະເໜີຢ່າງໜ້ອຍ ໜຶ່ງສ່ວນສີ່ ຂອງຈຳນວນສະມາຊິກສະພາປະຊາຊົນຂັ້ນແຂວງ ທັງໝົດ.

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຜູ້ກຳນົດລະບຽບການກ່ຽວກັບການໃຫ້ຄະແນນໄວ້ວາງໃຈ, ການລົງມະຕິບໍ່ໄວ້ວາງໃຈ ແລະ ການປົດຕຳແໜ່ງ.

## ໝວດທີ 2
## ການຕິດຕາມກວດກາຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ

**ມາດຕາ 70 (ປັບປຸງ) ເປົ້າໝາຍຖືກຕິດຕາມກວດກາ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ**

ເປົ້າໝາຍຖືກຕິດຕາມກວດກາຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ມີ ດັ່ງນີ້:

1. ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
2. ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ;
3. ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ;
4. ຫົວໜ້າອົງການໄອຍະການປະຊາຊົນທ້ອງຖິ່ນ;
5. ປະທານ, ຮອງປະທານສານປະຊາຊົນ ແລະ ຜູ້ພິພາກສາຂອງ ສານປະຊາຊົນທ້ອງຖິ່ນ;
6. ປະທານ, ຮອງປະທານ ຄະນະກຳມະການ, ເລຂາທິການ ສະພາປະຊາຊົນຂັ້ນແຂວງ, ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງຂັ້ນເມືອງ;
7. ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ.

**ມາດຕາ 71 (ປັບປຸງ) ເນື້ອໃນການຕິດຕາມກວດກາ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາຕາມເນື້ອໃນ ດັ່ງນີ້:

1. ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ, ມະຕິຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ແຜນພັດທະນາເສດຖະກິດ-ສັງຄົມຂັ້ນທ້ອງຖິ່ນ, ແຜນງົບປະມານແຫ່ງລັດ ຂັ້ນແຂວງ ແລະ ໂຄງການກໍ່ສ້າງໂຄງລ່າງພື້ນຖານຂອງທ້ອງຖິ່ນ, ການເຄື່ອນໄຫວຂອງອົງການໄອຍະການປະຊາຊົນທ້ອງຖິ່ນ, ສານປະຊາຊົນທ້ອງຖິ່ນ, ອົງການກວດກາລັດຂັ້ນແຂວງ, ອົງການກວດສອບປະຈຳພາກ;

2. ນິຕິກຳຂອງ ບັນດາເປົ້າໝາຍຖືກຕິດຕາມກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 70 ຂອງກົດໝາຍສະບັບນີ້ ທີ່ເຫັນວ່າຂັດກັບ ລັດຖະທຳມະນູນ, ກົດໝາຍ ຫຼື ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ, ຍົກເວັ້ນ ຄຳຕັດສິນກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ທ້ອງຖິ່ນ;

3. ການໃຫ້ຄວາມກະຈ່າງແຈ້ງ ຂອງເປົ້າໝາຍຖືກຕິດຕາມກວດກາ;

4. ບົດລາຍງານຂອງຄະນະກຳມະການສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ, ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງຂັ້ນເມືອງ;

5. ການເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງ;

6. ການແກ້ໄຂຄຳຮ້ອງທຸກ;

7. ບົດລາຍງານບັນຫາໃດໜຶ່ງຂອງຄະນະສະເພາະກິດ.

**ມາດຕາ 72 ການສ້າງແຜນການຕິດຕາມກວດກາ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ສ້າງແຜນການຕິດຕາມກວດກາ ປະຈຳຫົກເດືອນ ແລະ ປະຈຳປີ ໂດຍອີງຕາມແຜນການຕິດຕາມກວດກາ ຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ ແລະ ຕາມການສະເໜີຂອງຄະນະກຳມະການສະພາປະຊາຊົນຂັ້ນແຂວງ, ສະມາຊິກສະພາປະຊາຊົນຂັ້ນແຂວງ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ຂັ້ນແຂວງ. ຫຼັງຈາກແຜນການໄດ້ຖືກຮັບຮອງເອົາແລ້ວ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແບ່ງຄວາມຮັບຜິດຊອບໃຫ້ກຳມະການຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ເພື່ອຈັດຕັ້ງປະຕິບັດ ແລ້ວລາຍງານໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເພື່ອມີວິທີການ ແລະ ມາດຕະການແກ້ໄຂຢ່າງເໝາະສົມ ແລະ ທັນເວລາ.

**ມາດຕາ 73 ການຕິດຕາມກວດກາບົດລາຍງານ ໃນກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາບົດລາຍງານ ຂອງເປົ້າໝາຍຖືກຕິດຕາມກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 70 ຂອງກົດໝາຍສະບັບນີ້. ຖ້າເຫັນວ່າມີຄວາມຈຳເປັນກໍເຊີນການຈັດຕັ້ງ ຫຼື ບຸກຄະລາກອນດັ່ງກ່າວ ມາໃຫ້ຄວາມກະຈ່າງແຈ້ງຕື່ມອີກ.

ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາບົດລາຍງານ ຕາມຂັ້ນຕອນ ດັ່ງນີ້:

1. ເປົ້າໝາຍຖືກຕິດຕາມກວດກາ ລາຍງານ;

2. ປະທານຄະນະກຳມະການສະພາປະຊາຊົນຂັ້ນແຂວງ ທີ່ຖືກມອບໝາຍ ມີຄຳເຫັນ;

3. ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າ, ປະກອບຄຳເຫັນ;

4. ເປົ້າໝາຍຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍ;

5. ການລົງມະຕິຮັບຮອງເອົາບົດລາຍງານ.

**ມາດຕາ 74 (ປັບປຸງ) ການຕິດຕາມກວດການິຕິກຳ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຊຸກຍູ້ໃຫ້ອົງການປົກຄອງ ແຂວງ, ນະຄອນຫຼວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ, ປະທານອົງການກວດກາລັດຂັ້ນແຂວງ ແລະ ປະທານອົງການກວດສອບປະຈຳພາກ ອອກນິຕິກຳ ເພື່ອຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິກອງ

ປະຊຸມສະພາປະຊາຊົນຂັ້ນແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂັ້ນແຂວງ ໃຫ້ທັນເວລາ ແລະ ຕິດຕາມກວດກາ, ພິຈາລະນານິຕິກຳດັ່ງກ່າວ. ກ່ອນຈະພິຈາລະນານັ້ນ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ມອບນິຕິກຳນັ້ນໃຫ້ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ທີ່ກ່ຽວຂ້ອງ ຄົ້ນຄວ້າ, ກະກຽມປະກອບຄຳເຫັນເສຍກ່ອນ.

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ສະເໜີໃຫ້ໂຈະການຈັດຕັ້ງປະຕິບັດນິຕິກຳຂອງ ອົງການລັດຂັ້ນແຂວງທີ່ຂັດກັບ ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ ແລະ ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ ແລ້ວນຳສະເໜີຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ພິຈາລະນາ, ຍົກເວັ້ນຄຳຕັດສິນ ກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ.

ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນານິຕິກຳ ຕາມຂັ້ນຕອນ ດັ່ງນີ້:

1. ປະທານຄະນະກຳມະການສະພາປະຊາຊົນຂັ້ນແຂວງ ລາຍງານຜົນການຕິດຕາມກວດກາ;
2. ຜູ້ອອກນິຕິກຳ ຊີ້ແຈງ, ອະທິບາຍ;
3. ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າ, ມີຄຳເຫັນ;
4. ຜູ້ອອກນິຕິກຳ ຊີ້ແຈງ, ອະທິບາຍ ເພີ່ມເຕີມ;
5. ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນາ, ລົງມະຕິຮັບຮອງເອົາບົດລາຍງານຜົນການຕິດຕາມກວດກາ.

**ມາດຕາ 75 (ໃໝ່) ການຕິດຕາມກວດກາການໃຫ້ຄວາມກະຈ່າງແຈ້ງ ໃນກອງປະຊຸມ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ**

ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາການໃຫ້ຄວາມກະຈ່າງແຈ້ງ ຂອງເປົ້າໝາຍຖືກຕິດຕາມກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 70 ຂອງກົດໝາຍສະບັບນີ້ ຕໍ່ບັນຫາໃດໜຶ່ງ ທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງຊັກຖາມ ໂດຍໃຫ້ເປົ້າໝາຍຖືກຕິດຕາມກວດກາ ລາຍງານ, ຊີ້ແຈງ ໃຫ້ຄວາມກະຈ່າງແຈ້ງ ຕໍ່ບັນຫານັ້ນ ໃຫ້ມີຄວາມຖືກຕ້ອງຕາມກົດໝາຍ ແລະ ສອດຄ່ອງກັບຄວາມເປັນຈິງ.

ການຕິດຕາມກວດກາການໃຫ້ຄວາມກະຈ່າງແຈ້ງ ຂອງກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ເປົ້າໝາຍຖືກຕິດຕາມກວດກາ ລາຍງານໃຫ້ຄວາມກະຈ່າງແຈ້ງ ຕໍ່ຂໍ້ຊັກຖາມ;
2. ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າ, ປະກອບຄຳເຫັນ ແລະ ຊັກຖາມ;
3. ເປົ້າໝາຍຖືກຕິດຕາມກວດກາ ຊີ້ແຈງເພີ່ມເຕີມ;
4. ປະທານກອງປະຊຸມ ສັງລວມ.

**ມາດຕາ 76 (ໃໝ່) ການຕິດຕາມກວດກາບົດລາຍງານ ຂອງຄະນະກຳມະການສະພາປະຊາຊົນຂັ້ນແຂວງ, ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງຂັ້ນເມືອງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ**

ຄະນະກຳມະການຂອງສະພາປະຊາຊົນຂັ້ນແຂວງ, ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງຂັ້ນເມືອງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ລາຍງານການເຄື່ອນໄຫວວຽກງານຂອງຕົນ ຕໍ່ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາບົດລາຍງານ ຂອງຄະນະກຳມະການສະພາປະຊາຊົນຂັ້ນແຂວງ, ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງຂັ້ນເມືອງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຕາມຂັ້ນຕອນ ດັ່ງນີ້:

1. ກຳມະການຂອງສະພາປະຊາຊົນຂັ້ນແຂວງ, ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງຂັ້ນເມືອງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ລາຍງານ;
2. ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າ, ປະກອບຄຳເຫັນ;
3. ຜູ້ລາຍງານ ຊີ້ແຈງ, ອະທິບາຍ;
4. ປະທານກອງປະຊຸມສັງລວມ.

**ມາດຕາ 77 (ປັບປຸງ) ການຕິດຕາມກວດກາການເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຜູ້ຕິດຕາມກວດກາການເຄື່ອນໄຫວວຽກງານ ຂອງຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ ເພື່ອເຮັດໃຫ້ການເລືອກຕັ້ງໄດ້ດຳເນີນໄປຢ່າງມີປະຊາທິປະໄຕ, ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 78 (ປັບປຸງ) ການຕິດຕາມກວດກາການແກ້ໄຂຄຳຮ້ອງທຸກ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາການແກ້ໄຂຄຳຮ້ອງທຸກ ໂດຍອົງການປົກຄອງແຂວງ, ນະຄອນຫຼວງ, ອົງການໄອຍະການປະຊາຊົນ, ສານປະຊາຊົນ ຂັ້ນແຂວງ, ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງຂັ້ນເມືອງ ໃນການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການແກ້ໄຂຄຳຮ້ອງທຸກ.

ໃນການຕິດຕາມກວດກາ ຖ້າເຫັນວ່າການຈັດຕັ້ງ ແລະ ບຸກຄະລາກອນ ຫາກມີການລະເມີດກົດໝາຍນັ້ນ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ສະເໜີໃຫ້ອົງການທີ່ກ່ຽວຂ້ອງ ແກ້ໄຂຜົນການຕິດຕາມກວດກາ ຕາມກົດໝາຍ ແລະ ລະບຽບການ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ ແລ້ວລາຍງານຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃນການແກ້ໄຂນັ້ນ.

**ມາດຕາ 79 (ປັບປຸງ ການແຕ່ງຕັ້ງຄະນະສະເພາະກິດ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແຕ່ງຕັ້ງຄະນະສະເພາະກິດຂອງຕົນ ເພື່ອຕິດຕາມກວດກາລະອຽດກ່ຽວກັບບັນຫາໃດໜຶ່ງ ຕາມການສະເໜີຂອງຄະນະກຳມະການສະພາປະຊາຊົນຂັ້ນແຂວງ, ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງຂັ້ນເມືອງ, ສະມາຊິກສະພາປະຊາຊົນຂັ້ນແຂວງ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນ ຂັ້ນແຂວງ.

ມະຕິແຕ່ງຕັ້ງຄະນະສະເພາະກິດ ປະກອບດ້ວຍ:

1. ເນື້ອໃນການຕິດຕາມກວດກາ;
2. ເປົ້າໝາຍການຕິດຕາມກວດກາ;
3. ໂຄງປະກອບບຸກຄະລາກອນ ຊຶ່ງປະກອບດ້ວຍ ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງຈຳນວນໜຶ່ງ;
4. ສິດ ແລະ ໜ້າທີ່ ຊຶ່ງມີ ດັ່ງນີ້:

4.1. ສະເໜີໃຫ້ເປົ້າໝາຍຖືກຕິດຕາມກວດກາ ລາຍງານເປັນລາຍລັກອັກສອນ, ສະໜອງຂໍ້ມູນ, ເອກະສານທີ່ກ່ຽວຂ້ອງກັບເນື້ອໃນການຕິດຕາມກວດກາ, ຊີ້ແຈງ, ອະທິບາຍບັນຫາທີ່ຄະນະສະເພາະກິດມີຄວາມສົນໃຈ;

4.2. ພິຈາລະນາ, ຕີລາຄາບົດລາຍງານ, ຂໍ້ມູນ, ເອກະສານຂອງເປົ້າໝາຍຖືກຕິດຕາມກວດກາ;

4.3. ໃຫ້ຄຳແນະນຳແກ່ເປົ້າໝາຍຖືກຕິດຕາມກວດກາ ກ່ຽວກັບການແກ້ໄຂ ເມື່ອເຫັນວ່າມີການລະເມີດກົດໝາຍ, ກໍ່ຄວາມເສຍຫາຍຕໍ່ ຜົນປະໂຫຍດຂອງປະເທດຊາດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະ ເມືອງ;

4.4. ສະເໜີຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເພື່ອພິຈາລະນາຕົກລົງໃຫ້ເປົ້າໝາຍດັ່ງກ່າວ ຢຸດເຊົາການລະເມີດກົດໝາຍ ແລະ ຟື້ນຟູສິດ, ຜົນປະໂຫຍດຂອງປະເທດຊາດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ. ມອບໃຫ້ການຈັດຕັ້ງ ທີ່ມີສິດ, ໜ້າທີ່ ທີ່ກ່ຽວຂ້ອງ ພິຈາລະນາການລົງວິໄນ ແລະ ນຳໃຊ້ມາດຕະການອື່ນຕໍ່ຜູ້ລະເມີດນັ້ນ ຕາມກົດໝາຍ;

4.5. ປະຕິບັດໃຫ້ຖືກຕ້ອງຕາມ ເນື້ອໃນ, ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນມະຕິແຕ່ງຕັ້ງຄະນະສະເພາະກິດ ຢ່າງເຂັ້ມງວດ;

4.6. ສົ່ງບົດລາຍງານຜົນການຕິດຕາມກວດກາ ໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພາຍໃນເວລາ ສິບວັນ ນັບແຕ່ວັນສິ້ນສຸດການຕິດຕາມກວດກາເປັນຕົ້ນໄປ.

ມະຕິດັ່ງກ່າວ ຕ້ອງສົ່ງໃຫ້ເປົ້າໝາຍ ຖືກຕິດຕາມກວດກາ ແລະ ອົງການທີ່ກ່ຽວຂ້ອງ ເຈັດວັນ ກ່ອນຈະດຳເນີນການຕິດຕາມກວດກາ.

**ມາດຕາ 80 ການຕິດຕາມກວດກາບົດລາຍງານຂອງຄະນະສະເພາະກິດ**

ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາບົດລາຍງານຂອງ ຄະນະສະເພາະກິດ ຕາມຂັ້ນຕອນ ດັ່ງນີ້:

1. ຫົວໜ້າຄະນະສະເພາະກິດ ລາຍງານ;
2. ເປົ້າໝາຍຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍ;
3. ຕົວແທນຂອງການຈັດຕັ້ງ ຫຼື ບຸກຄົນ ທີ່ຖືກເຊີນ ປະກອບຄຳເຫັນ;
4. ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າ, ມີຄຳເຫັນ;
5. ເປົ້າໝາຍຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍເພີ່ມເຕີມ;
6. ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນາລົງມະຕິຮັບຮອງເອົາບົດລາຍງານ ຜົນການຕິດຕາມກວດກາ.

**ມາດຕາ 81 ການພິຈາລະນາ ແລະ ແກ້ໄຂ ຜົນການຕິດຕາມກວດກາ**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນາ ແລະ ແກ້ໄຂຜົນການຕິດຕາມກວດກາ ດັ່ງນີ້:

1. ສະເໜີໃຫ້ການຈັດຕັ້ງ ຫຼື ບຸກຄົນ ທີ່ມີ ສິດ ແລະ ໜ້າທີ່ ທີ່ກ່ຽວຂ້ອງອອກຄຳສັ່ງໃຫ້ຜູ້ລະເມີດນັ້ນ ຢຸດເຊົາການລະເມີດໂດຍທັນທີ, ໃຫ້ຜູ້ລະເມີດຟື້ນຟູ, ຊົດເຊີຍຄ່າເສຍຫາຍຕໍ່ຜົນປະໂຫຍດຂອງປະເທດຊາດ, ລວມໝູ່ ຫຼື ສິດ, ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ລົງວິໄນຕໍ່ຜູ້ລະເມີດ ຫຼື ນຳໃຊ້ ມາດຕະການອື່ນຕາມກົດໝາຍ;

2. ໂຈະການປະຕິບັດນິຕິກຳຂອງອົງການລັດຂັ້ນແຂວງ ທີ່ຂັດກັບລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ ຫຼື ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລ້ວລາຍງານຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ພິຈາລະນາ ແລະ ຕົກລົງ ກ່ຽວກັບການຍົກເລີກນິຕິກຳນັ້ນ.

## ໝວດທີ 3
## ການຕິດຕາມກວດກາ ຂອງຄະນະກຳມະການສະພາປະຊາຊົນຂັ້ນແຂວງ

**ມາດຕາ 82 (ປັບປຸງ) ເປົ້າໝາຍຖືກຕິດຕາມກວດກາ ຂອງຄະນະກຳມະການສະພາປະຊາຊົນຂັ້ນແຂວງ**

ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາເປົ້າໝາຍ ຕາມມະຕິຄະນະປະຈຳສະພາປະຊາຊົນຂັ້ນແຂວງ ດັ່ງນີ້:

1. ພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ;
2. ອົງການໄອຍະການປະຊາຊົນທ້ອງຖິ່ນ;
3. ສານປະຊາຊົນທ້ອງຖິ່ນ.

**ມາດຕາ 83 (ປັບປຸງ) ເນື້ອໃນການຕິດຕາມກວດກາ ຂອງຄະນະກຳມະການສະພາປະຊາຊົນຂັ້ນແຂວງ**

ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາ ຕາມເນື້ອໃນ ດັ່ງນີ້:

1. ບົດລາຍງານ ການຈັດຕັ້ງ ແລະ ເຄື່ອນໄຫວຂອງ ບັນດາເປົ້າໝາຍຖືກຕິດຕາມກວດກາ ທີ່ຄະນະກຳມະການຕົນຮັບຜິດຊອບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 82 ຂອງກົດໝາຍສະບັບນີ້;

2. ນິຕິກຳຂອງ ການຈັດຕັ້ງ ຫຼື ບຸກຄະລາກອນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 82 ຂອງກົດໝາຍສະບັບນີ້ ທີ່ເຫັນວ່າຂັດກັບ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ, ຍົກເວັ້ນຄຳຕົກລົງກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;

3. ບົດລາຍງານຂອງໜ່ວຍສະເພາະກິດ;

4. ການໃຫ້ຄວາມກະຈ່າງແຈ້ງຂອງເປົ້າໝາຍຖືກຕິດຕາມກວດກາ.

**ມາດຕາ 84 ການສ້າງແຜນການຕິດຕາມກວດກາຂອງຄະນະກຳມະການສະພາປະຊາຊົນຂັ້ນແຂວງ**

ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ສ້າງແຜນການຕິດຕາມກວດກາຂອງຕົນ ເປັນແຕ່ລະໄລຍະ ໂດຍອີງຕາມແຜນການຕິດຕາມກວດກາຂອງ ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ການສະເໜີຂອງກຳມະການສັງກັດຄະນະກຳມະການ. ຫຼັງຈາກແຜນການໄດ້ຖືກຮັບຮອງເອົາແລ້ວ

ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ຕ້ອງແບ່ງຄວາມຮັບຜິດຊອບ ໃຫ້ກຳມະການສັງກັດຄະນະກຳມະການຂອງຕົນ ເພື່ອຈັດຕັ້ງປະຕິບັດ.

**ມາດຕາ 85 (ປັບປຸງ) ການຕິດຕາມກວດກາບົດລາຍງານ ໃນກອງປະຊຸມຄະນະກຳມະການ**

ກອງປະຊຸມຄະນະກຳມະການສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາບົດລາຍງານການຈັດຕັ້ງ ແລະ ເຄື່ອນໄຫວຂອງເປົ້າໝາຍຖືກຕິດຕາມກວດກາ ຕາມຂັ້ນຕອນ ດັ່ງນີ້:

1. ການຈັດຕັ້ງ ຫຼື ບຸກຄະລາກອນ ທີ່ກ່ຽວຂ້ອງ ລາຍງານ;
2. ປະທານຄະນະກຳມະການ ມີຄຳເຫັນ;
3. ຄະນະກຳມະການ ຄົ້ນຄວ້າ, ປະກອບຄຳເຫັນ;
4. ຜູ້ລາຍງານ ຊີ້ແຈງ, ອະທິບາຍ ແລະ ໃຫ້ຄວາມກະຈ່າງແຈ້ງ;
5. ການລົງມະຕິຮັບຮອງເອົາບົດລາຍງານ.

ໃນກໍລະນີ ຫາກເຫັນວ່າເນື້ອໃນບົດລາຍງານດັ່ງກ່າວ ມີການລະເມີດກົດໝາຍນັ້ນ ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ມີສິດສະເໜີໃຫ້ອົງການທີ່ກ່ຽວຂ້ອງແກ້ໄຂ ແລະ ແຈ້ງໃຫ້ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີ ເປັນຕົ້ນໄປ. ຖ້າຫາກບໍ່ມີການແກ້ໄຂ ຫຼື ແກ້ໄຂບໍ່ເໝາະສົມ ກໍໃຫ້ລາຍງານຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນາ.

**ມາດຕາ 86 (ປັບປຸງ) ການຕິດຕາມກວດການິຕິກຳໃນກອງປະຊຸມຄະນະກຳມະການ**

ກອງປະຊຸມຄະນະກຳມະການສະພາປະຊາຊົນຂັ້ນແຂວງ ຕິດຕາມກວດການິຕິກຳ ຕາມຂັ້ນຕອນ ດັ່ງນີ້:

1. ຜູ້ອອກນິຕິກຳ ລາຍງານ, ຊີ້ແຈງ, ອະທິບາຍ;
2. ປະທານຄະນະກຳມະການ ມີຄຳເຫັນ;
3. ຜູ້ເຂົ້າຮ່ວມກອງປະຊຸມ ຄົ້ນຄວ້າ, ປະກອບຄຳເຫັນ;
4. ຜູ້ອອກນິຕິກຳ ຊີ້ແຈງ, ອະທິບາຍ ເພີ່ມເຕີມ;
5. ການລົງມະຕິຮັບຮອງເອົາຜົນການຕິດຕາມກວດກາ.

ໃນກໍລະນີ ເຫັນວ່ານິຕິກຳດັ່ງກ່າວ ຫາກຂັດກັບກົດໝາຍທີ່ກ່ຽວຂ້ອງນັ້ນ ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ມີສິດສະເໜີໃຫ້ອົງການທີ່ກ່ຽວຂ້ອງແກ້ໄຂ ແລະ ແຈ້ງໃຫ້ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີ ເປັນຕົ້ນໄປ. ຖ້າຫາກບໍ່ມີການແກ້ໄຂ ຫຼື ແກ້ໄຂບໍ່ເໝາະສົມ ກໍໃຫ້ລາຍງານຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນາ.

**ມາດຕາ 87 ການແຕ່ງຕັ້ງໜ່ວຍສະເພາະກິດ**

ເມື່ອມີຄວາມຈຳເປັນ ຫຼື ຕາມການມອບໝາຍ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງນັ້ນ, ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ອອກຂໍ້ຕົກລົງແຕ່ງຕັ້ງໜ່ວຍສະເພາະກິດ ເພື່ອຕິດຕາມກວດກາລະອຽດກ່ຽວກັບບັນຫາໃດໜຶ່ງ. ສຳລັບໂຄງປະກອບຂອງຂໍ້ຕົກລົງ ໃຫ້ປະຕິບັດຄືກັນກັບໂຄງປະກອບຂອງມະຕິແຕ່ງຕັ້ງຄະນະສະເພາະກິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 79 ຂອງກົດໝາຍສະບັບນີ້.

**ມາດຕາ 88 (ປັບປຸງ) ການຕິດຕາມກວດກາບົດລາຍງານຂອງໜ່ວຍສະເພາະກິດ**

ກອງປະຊຸມຄະນະກຳມະການສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາບົດລາຍງານຂອງໜ່ວຍສະເພາະກິດຕາມຂັ້ນຕອນ ດັ່ງນີ້:

1. ຫົວໜ້າໜ່ວຍສະເພາະກິດ ລາຍງານ;
2. ເປົ້າໝາຍຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍ;
3. ກອງປະຊຸມ ຄົ້ນຄວ້າ, ປະກອບຄຳເຫັນ;
4. ເປົ້າໝາຍຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍ ເພີ່ມເຕີມ;
5. ປະທານກອງປະຊຸມສະຫຼຸບ, ຫຼັງຈາກນັ້ນ ກຳມະການສັງກັດຄະນະກຳມະການທີ່ເຂົ້າຮ່ວມກອງປະຊຸມລົງມະຕິຮັບຮອງເອົາບົດລາຍງານຜົນການຕິດຕາມກວດກາ;
6. ຄະນະກຳມະການ ລາຍງານຜົນກອງປະຊຸມ ຕໍ່ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພ້ອມທັງແຈ້ງໃຫ້ການຈັດຕັ້ງ ແລະ ບຸກຄົນ ທີ່ກ່ຽວຂ້ອງ ຮັບຊາບ.

**ມາດຕາ 89 (ປັບປຸງ) ການພິຈາລະນາ ແລະ ແກ້ໄຂ ຜົນການຕິດຕາມກວດກາຂອງໜ່ວຍສະເພາະກິດ**

ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ພິຈາລະນາ ແລະ ແກ້ໄຂຜົນການຕິດຕາມກວດກາຂອງໜ່ວຍສະເພາະກິດ ດ້ວຍການສະເໜີໃຫ້ການຈັດຕັ້ງ ຫຼື ບຸກຄົນ ທີ່ມີ ສິດ ແລະ ໜ້າທີ່ ທີ່ກ່ຽວຂ້ອງອອກຄຳສັ່ງໂຈະການຈັດຕັ້ງປະຕິບັດນິຕິກຳທີ່ບໍ່ຖືກຕ້ອງ ແລະ ຢຸດເຊົາການກະທຳ ທີ່ເປັນການລະເມີດກົດໝາຍ, ລະບຽບການ ແລະ ລາຍງານຕໍ່ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເພື່ອມີມາດຕະການ ແລະ ວິທີການແກ້ໄຂ ເປັນຕົ້ນ ການພິຈາລະນາ ຍົກເລີກນິຕິກຳນັ້ນ.

**ມາດຕາ 90 (ໃໝ່) ການຕິດຕາມກວດກາການໃຫ້ຄວາມກະຈ່າງແຈ້ງ ໃນກອງປະຊຸມຄະນະກຳມະການ**

ກອງປະຊຸມຄະນະກຳມະການສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາການໃຫ້ຄວາມກະຈ່າງແຈ້ງຂອງເປົ້າໝາຍຖືກຕິດຕາມກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 82 ຂອງກົດໝາຍສະບັບນີ້ ຕໍ່ບັນຫາໃດໜຶ່ງທີ່ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ຊັກຖາມ ໂດຍໃຫ້ເປົ້າໝາຍຖືກຕິດຕາມກວດກາ ລາຍງານ, ຊີ້ແຈງ ໃຫ້ຄວາມກະຈ່າງແຈ້ງ ຕໍ່ບັນຫານັ້ນ ໃຫ້ມີຄວາມຖືກຕ້ອງຕາມກົດໝາຍ ແລະ ສອດຄ່ອງກັບຄວາມເປັນຈິງ.

ການຕິດຕາມກວດກາການໃຫ້ຄວາມກະຈ່າງແຈ້ງ ຂອງກອງປະຊຸມຄະນະກຳມະການສະພາປະຊາຊົນຂັ້ນແຂວງ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ເປົ້າໝາຍຖືກຕິດຕາມກວດກາ ລາຍງານໃຫ້ຄວາມກະຈ່າງແຈ້ງ ຕໍ່ຂໍ້ຊັກຖາມ;
2. ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າ, ປະກອບຄຳເຫັນ ແລະ ຊັກຖາມ;
3. ເປົ້າໝາຍຖືກຕິດຕາມກວດກາ ຊີ້ແຈງເພີ່ມເຕີມ;
4. ປະທານກອງປະຊຸມສັງລວມ.

## ໝວດທີ 4
## ການຕິດຕາມກວດກາຂອງຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງຂັ້ນເມືອງ

**ມາດຕາ 91 (ປັບປຸງ) ການຕິດຕາມກວດກາຂອງຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງ ຂັ້ນເມືອງ**

ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງຂັ້ນເມືອງ ຕິດຕາມກວດກາຕາມແຜນການຕິດຕາມກວດກາຂອງ ສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຄະນະກຳມະການສະພາປະຊາຊົນຂັ້ນແຂວງ ແລະ ບັນຫາໃດໜຶ່ງ ຕາມການສະເໜີສະມາຊິກສະພາປະຊາຊົນຂັ້ນແຂວງ, ປະຊາຊົນ ແລະ ສື່ມວນຊົນ.

**ມາດຕາ 92 (ໃໝ່) ສິດ ແລະ ໜ້າທີ່ໃນການຕິດຕາມກວດກາຂອງ ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງຂັ້ນເມືອງ**

ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຂົ້າຮ່ວມໃນການຕິດຕາມກວດກາ ກັບ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ບັນດາຄະນະກຳມະການ ສະພາປະຊາຊົນຂັ້ນແຂວງ ແລະ ຄະນະສະເພາະກິດ ຫຼື ໜ່ວຍສະເພາະກິດ;
2. ຕິດຕາມກວດກາການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານຂັ້ນແຂວງ, ໂຄງການລົງທຶນຂອງລັດທີ່ຢູ່ທ້ອງຖິ່ນຂອງຕົນ;
3. ຕິດຕາມກວດກາບັນດາອົງການລັດຢູ່ທ້ອງຖິ່ນຂອງຕົນ ໃນການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ, ມະຕິຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ບັນດານິຕິກຳໃຕ້ກົດໝາຍ ຂອງທ້ອງຖິ່ນ;
4. ຕິດຕາມກວດການິຕິກຳ ແລະ ການຈັດຕັ້ງປະຕິບັດວຽກງານຂອງອົງການປົກຄອງທ້ອງຖິ່ນ ເພື່ອໃຫ້ສອດຄ່ອງກັບ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳຂອງອົງການລັດຂັ້ນເທິງ; ລາຍຮັບ-ລາຍຈ່າຍງົບ ປະມານຂັ້ນທ້ອງຖິ່ນ, ການຈັດຕັ້ງປະຕິບັດວຽກງານທາງດ້ານການເມືອງ ແລະ ການປົກຄອງ, ເສດຖະກິດ-ສັງຄົມ, ການຈັດຕັ້ງ ແລະ ບຸກຄະລາກອນ ທີ່ສະພາປະຊາຊົນຂັ້ນແຂວງຮັບຮອງເອົາ;
5. ຕິດຕາມ, ເກັບກຳ ແລະ ສະໜອງຂໍ້ມູນ ໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃນການພິຈາລະນາ ແລະ ແກ້ໄຂຄຳຮ້ອງທຸກ ຂອງພົນລະເມືອງ ຫຼື ການຈັດຕັ້ງ;
6. ລາຍງານຜົນການຕິດຕາມກວດກາ ຕໍ່ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງສະພາປະຊາຊົນຂັ້ນແຂວງ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

## ໝວດທີ 5
## ການຕິດຕາມກວດກາຂອງສະມາຊິກສະພາປະຊາຊົນຂັ້ນແຂວງ

**ມາດຕາ 93 ເນື້ອໃນການຕິດຕາມກວດກາ ຂອງສະມາຊິກສະພາປະຊາຊົນຂັ້ນແຂວງ**

ສະມາຊິກສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາ ຕາມເນື້ອໃນ ດັ່ງນີ້:

1. ບົດລາຍງານຂອງພາກສ່ວນຕ່າງໆ ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ;
2. ການຊັກຖາມ ເປົ້າໝາຍຖືກຕິດຕາມກວດກາ;
3. ນິຕິກຳຂອງອົງການລັດຂັ້ນທ້ອງຖິ່ນ, ຍົກເວັ້ນຄຳຕັດສິນ ກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;
4. ການແກ້ໄຂຄຳຮ້ອງທຸກ;
5. ລາຍງານຜົນການຕິດຕາມກວດກາຕໍ່ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

**ມາດຕາ 94 (ປັບປຸງ) ການສ້າງ ແລະ ປະຕິບັດແຜນການຕິດຕາມກວດກາ**

ສະມາຊິກສະພາປະຊາຊົນຂັ້ນແຂວງ ສ້າງແຜນການ, ຕາຕະລາງ ການເຄື່ອນໄຫວວຽກງານ ຕິດຕາມກວດກາຂອງຕົນ ໂດຍອີງຕາມແຜນການຂອງ ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຄະນະກຳມະການສະພາປະຊາຊົນຂັ້ນແຂວງ.

ນອກຈາກດຳເນີນການຕິດຕາມກວດກາດ້ວຍຕົນເອງແລ້ວ ສະມາຊິກສະພາປະຊາຊົນຂັ້ນແຂວງ ຍັງມີ ສິດ ແລະ ໜ້າທີ່ ເຂົ້າຮ່ວມການເຄື່ອນໄຫວຕິດຕາມກວດກາຂອງ ຄະນະກຳມະການສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ກອງປະຊຸມສະພາປະຊາຊົນຂັ້ນແຂວງ.

ສຳລັບສະມາຊິກສະພາປະຊາຊົນຂັ້ນແຂວງ ທີ່ຄວບຕຳແໜ່ງ ໃຫ້ແບ່ງເວລາເຄື່ອນໄຫວວຽກງານຕິດຕາມກວດກາຕາມແຜນການ.

**ມາດຕາ 95 (ປັບປຸງ) ການຕິດຕາມກວດກາບົດລາຍງານ**

ສະມາຊິກສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາບົດລາຍງານ ດ້ວຍການ ເຂົ້າຮ່ວມການຄົ້ນຄວ້າ, ປະກອບຄຳເຫັນ, ພິຈາລະນາ ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄົບຄະນະຂອງຄະນະກຳມະການສະພາປະຊາຊົນຂັ້ນແຂວງ.

**ມາດຕາ 96 (ປັບປຸງ) ການຊັກຖາມໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ**

ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊັກຖາມ ຄະນະປະຈຳ, ປະທານ, ຮອງປະທານຄະນະກຳມະການ ແລະ ເລຂາທິການສະພາປະຊາຊົນຂັ້ນແຂວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ, ຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ ຂັ້ນແຂວງ.

ຄຳຊັກຖາມຕ້ອງກະທັດຮັດ, ຈະແຈ້ງ, ມີບ່ອນອີງ ແລະ ຕ້ອງຕິດພັນກັບ ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ຖືກຊັກຖາມ, ອາດຊັກຖາມກັບທີ່ ຫຼື ເປັນລາຍລັກອັກສອນ.

ຜູ້ຖືກຊັກຖາມນັ້ນ ຕ້ອງຕອບໃຫ້ ຈະແຈ້ງ, ກະທັດຮັດ ແລະ ຖືກກັບຄຳຊັກຖາມ. ໃນກໍລະນີບໍ່ສາມາດຕອບກັບທີ່ໄດ້ ໃຫ້ຕອບເປັນລາຍລັກອັກສອນ ແລ້ວສົ່ງໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

**ມາດຕາ 97 (ປັບປຸງ) ການຕິດຕາມກວດການິຕິກຳໃນກອງປະຊຸມ**

ສະມາຊິກສະພາປະຊາຊົນຂັ້ນແຂວງ ເຂົ້າຮ່ວມຄົ້ນຄວ້າ, ປະກອບຄຳເຫັນ ແລະ ພິຈາລະນານິຕິກຳຂອງອົງການລັດຂັ້ນທ້ອງຖິ່ນ ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ ແລະ ກອງປະຊຸມຄົບຄະນະຂອງຄະນະກຳມະການສະພາປະຊາຊົນຂັ້ນແຂວງ.

**ມາດຕາ 98 (ປັບປຸງ) ການຕິດຕາມກວດກາ ການແກ້ໄຂຄຳຮ້ອງທຸກ**

ສະມາຊິກສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຮັບຕ້ອນ ແລະ ໃຫ້ຄຳປຶກສາແກ່ປະຊາຊົນ, ຮັບຄຳຮ້ອງທຸກຂອງ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເພື່ອສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ພິຈາລະນາ, ແກ້ໄຂ ແລະ ຕິດຕາມກວດກາຜົນການແກ້ໄຂຄຳຮ້ອງທຸກດັ່ງກ່າວ.

**ມາດຕາ 99 ການລາຍງານຜົນການຕິດຕາມກວດກາ**

ພາຍຫຼັງໄດ້ເຄື່ອນໄຫວຕິດຕາມກວດກາແລ້ວ ສະມາຊິກສະພາປະຊາຊົນຂັ້ນແຂວງ ຕ້ອງລາຍງານຜົນການຕິດຕາມກວດການັ້ນ ຕໍ່ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຄະນະກຳມະການຂອງສະພາປະຊາຊົນຂັ້ນແຂວງທີ່ຕົນສັງກັດເປັນລາຍລັກອັກສອນ.

## ພາກທີ V
## ການອຳນວຍຄວາມສະດວກໃຫ້ແກ່ວຽກງານຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ

**ມາດຕາ 100 ຄະນະເລຂາທິການ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ**

ຄະນະເລຂາທິການສະພາແຫ່ງຊາດ ແລະ ຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ ມີໜ້າທີ່ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ແລະ ອຳນວຍຄວາມສະດວກທາງດ້ານງົບປະມານ, ພາຫະນະ, ອຸປະກອນ ແລະ ຂໍ້ມູນ ຂ່າວສານ ຕ່າງໆທີ່ຈຳເປັນ ໃຫ້ແກ່ກອງປະຊຸມວຽກງານຕິດຕາມກວດກາຢູ່ໃນຄວາມຮັບຜິດຊອບຂອງຕົນ.

**ມາດຕາ 101 (ປັບປຸງ) ພັນທະຂອງ ອົງການຈັດຕັ້ງ ແລະ ພົນລະເມືອງ**

ອົງການຈັດຕັ້ງ ພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ພົນລະເມືອງທຸກຄົນ ມີພັນທະປະກອບສ່ວນ, ອຳນວຍຄວາມສະດວກໃຫ້ແກ່ການຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເປັນຕົ້ນ ການສະໜອງ ຂໍ້ມູນ ຂ່າວສານ, ໃຫ້ການຊ່ວຍເຫຼືອດ້ານຕ່າງໆ.

## ພາກທີ VI
## ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງເປົ້າໝາຍຖືກຕິດຕາມກວດກາ

**ມາດຕາ 102 (ປັບປຸງ) ສິດ ຂອງເປົ້າໝາຍຖືກຕິດຕາມກວດກາ**

ເປົ້າໝາຍຖືກຕິດຕາມກວດກາ ມີ ສິດ ດັ່ງນີ້:

1. ໄດ້ຮັບແຈ້ງການກ່ອນ ສິບຫ້າວັນ ລັດຖະການ ກ່ຽວກັບເນື້ອໃນ ແລະ ເວລາຂອງການຕິດຕາມກວດກາ, ຄຳຊັກຖາມທີ່ຈະຕ້ອງໄດ້ຕອບ;

2. ຊີ້ແຈງ, ອະທິບາຍ ກ່ຽວກັບບັນຫາທີ່ພົວພັນເຖິງ ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ;

3. ສະເໜີຕໍ່ ຄະນະປະຈຳສະພາແຫ່ງຊາດ ຫຼື ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນາຄືນກ່ຽວກັບການຕົກລົງໃນການຕິດຕາມກວດກາ ໃນກໍລະນີຜູ້ຖືກຕິດຕາມກວດກາຫາກບໍ່ເຫັນດີ.

**ມາດຕາ 103 (ປັບປຸງ) ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງເປົ້າໝາຍຖືກຕິດຕາມກວດກາ**

ເປົ້າໝາຍຖືກຕິດຕາມກວດກາ ມີ ໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້:

1. ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ແກ່ການຕິດຕາມກວດກາ ດ້ວຍການສະໜອງ ຂໍ້ມູນຂ່າວສານ, ເອກະສານຕ່າງໆໃຫ້ທັນເວລາ, ໃຫ້ຄຳຊີ້ແຈງ, ອະທິບາຍ ຕາມການສະເໜີຂອງ ກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມກຳມາທິການສະພາແຫ່ງຊາດ, ກອງປະຊຸມຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ; ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະກຳມະການສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງຂັ້ນເມືອງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ;

2. ສົ່ງນິຕິກຳຂອງຕົນໃຫ້ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ພາຍໃນເວລາ ເຈັດວັນ ນັບແຕ່ວັນລົງລາຍເຊັນປະກາດໃຊ້ເປັນ ຕົ້ນໄປ;

3. ຊີ້ແຈງ, ອະທິບາຍດ້ວຍຕົນເອງ ກ່ຽວກັບບັນຫາທີ່ກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມກຳມາທິການສະພາແຫ່ງຊາດ, ກອງປະຊຸມຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ, ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະກຳມະການສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງຂັ້ນເມືອງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ມີຄວາມສົນໃຈ; ໃນກໍລະນີຈະມອບສິດໃຫ້ຜູ້ອື່ນຂຶ້ນຊີ້ແຈງ, ອະທິບາຍແທນນັ້ນ ຕ້ອງໄດ້ຮັບການເຫັນດີຈາກກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມກຳມາທິການສະພາແຫ່ງຊາດ, ກອງປະຊຸມຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ; ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະກຳມະການສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງຂັ້ນເມືອງ ເສຍກ່ອນ;

4. ປະຕິບັດຄຳແນະນຳ, ຄຳສະເໜີ ແລະ ມະຕິ ຫຼື ຂໍ້ຕົກລົງ ກ່ຽວກັບວິທີການ ແລະ ມາດຕະການແກ້ໄຂ ຂອງການຕິດຕາມກວດກາຂອງກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມກຳມາທິການສະພາແຫ່ງຊາດ; ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະກຳມະການສະພາປະຊາຊົນຂັ້ນແຂວງ ຢ່າງເຂັ້ມງວດ ແລະ ທັນເວລາ.

**ມາດຕາ 104 (ປັບປຸງ) ການແກ້ໄຂຜົນການຕິດຕາມກວດກາຂອງເປົ້າໝາຍຖືກຕິດຕາມກວດກາ**

ເປົ້າໝາຍຖືກຕິດຕາມກວດກາ ຕ້ອງແກ້ໄຂຜົນການຕິດຕາມກວດກາ ດັ່ງນີ້:

1. ຢຸດເຊົາການກະທຳທີ່ເປັນການລະເມີດ ລັດຖະທຳມະນູນ, ກົດໝາຍ, ມະຕິ ກອງປະຊຸມສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ແລະ ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

2. ປັບປຸງ ຫຼື ຍົກເລີກ ນິຕິກຳໃຕ້ກົດໝາຍ ທີ່ຂັດກັບ ລັດຖະທຳມະນູນ ແລະ ກົດໝາຍ;

3. ແກ້ໄຂບັນຫາ ແລະ ປະຕິບັດຕາມຄຳແນະນຳ ຂອງ ຄະນະກຳມະການກວດກາຊົ່ວຄາວ, ຄະນະສະເພາະກິດ ແລະ ໜ່ວຍສະເພາະກິດ;

4. ລາຍງານຜົນການແກ້ໄຂ ຕໍ່ ຄະນະກຳມະການກວດກາຊົ່ວຄາວ, ຄະນະສະເພາະກິດ ແລະ ໜ່ວຍສະເພາະກິດ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

## ພາກທີ VII
## ຂໍ້ຫ້າມ

**ມາດຕາ 105 (ປັບປຸງ) ຂໍ້ຫ້າມສຳລັບຜູ້ຕິດຕາມກວດກາ**

ຫ້າມຜູ້ຕິດຕາມກວດກາ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ຕຳແໜ່ງ, ໜ້າທີ່, ສິດອຳນາດ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ ຫຼື ຍາດພີ່ນ້ອງ ຂອງຕົນ;

2. ນຳໃຊ້ ສິດ, ປະຕິບັດໜ້າທີ່ ແລະ ພາລະບົດບາດ ໃນການຕິດຕາມກວດກາເກີນຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ຮັບເອົາ, ຂໍເອົາ ສິນບົນ;

4. ບັງຄັບ ນາບຂູ່ ເປົ້າໝາຍຖືກຕິດຕາມກວດກາ;

5. ເມີນເສີຍຕໍ່ໜ້າທີ່, ບິດເບືອນຄວາມຈິງ, ປົດບັງ ຫຼື ປົກປ້ອງເປົ້າໝາຍຖືກຕິດຕາມກວດກາ;

6. ເປີດເຜີຍຄວາມລັບ ກ່ຽວກັບການຕິດຕາມກວດກາ ໂດຍບໍ່ໄດ້ຮັບອະນຸຍາດ;

7. ພົວພັນກັບເປົ້າໝາຍຖືກຕິດຕາມກວດກາ ເພື່ອຫາຜົນປະໂຫຍດ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 106 ຂໍ້ຫ້າມສຳລັບເປົ້າໝາຍຖືກຕິດຕາມກວດກາ**

ຫ້າມເປົ້າໝາຍຖືກຕິດຕາມກວດກາ ມີພຶດຕິກຳ ດັ່ງນີ້:

1. ປະຕິເສດການສະໜອງ ຂໍ້ມູນ, ເອກະສານ ກ່ຽວກັບການຕິດຕາມກວດກາ;

2. ລາຍງານ, ສະໜອງຂໍ້ມູນ, ເອກະສານ ບໍ່ຖືກກັບຄວາມຈິງ; ຊຸກເຊື່ອງ, ທຳລາຍເອກະສານ, ວັດຖຸສິ່ງຂອງ ຊຶ່ງເປັນຫຼັກຖານທີ່ພົວພັນເຖິງການຕິດຕາມກວດກາ;

3. ຂັດຂວາງ, ສ້າງຄວາມຫຍຸ້ງຍາກ, ນາບຂູ່ ຄະນະຕິດຕາມກວດກາ, ພະນັກງານ-ລັດຖະກອນ, ຜູ້ສະໜອງຂໍ້ມູນ ໃຫ້ແກ່ການຕິດຕາມກວດກາ ຫຼື ບຸກຄົນອື່ນ ທີ່ກ່ຽວຂ້ອງ;

4. ຊື້ຈ້າງ, ໃຫ້ສິນບົນຄະນະຕິດຕາມກວດກາ, ພະນັກງານ-ລັດຖະກອນ, ຜູ້ສະໜອງຂໍ້ມູນ ຫຼື ບຸກຄົນອື່ນ ກ່ຽວກັບການຕິດຕາມກວດກາ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 107 ຂໍ້ຫ້າມສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ມີພຶດຕິກຳ ດັ່ງນີ້:

1. ຍຸຍົງໃຫ້ມີການຕິດຕາມກວດກາ ຫຼື ໃຫ້ມີການຕ້ານການຕິດຕາມກວດກາ;

2. ແຊກແຊງ, ກ້າວກ່າຍ ແລະ ຂັດຂວາງ ການຕິດຕາມກວດກາ;

3. ປົກປິດ, ເຊື່ອງອຳ ຫຼື ທຳລາຍຂໍ້ມູນ, ຫຼັກຖານ ກ່ຽວກັບການຕິດຕາມກວດກາ;

4. ໃຊ້ຄວາມຮຸນແຮງ, ນາບຂູ່ ຫຼື ທຳຮ້າຍ ຜູ້ຕິດຕາມກວດກາ, ຜູ້ໃຫ້ຂໍ້ມູນ ຫຼື ບຸກຄົນອື່ນ ທີ່ກ່ຽວຂ້ອງ;

5. ປົກປ້ອງ, ຊຸກເຊື່ອງ ເປົ້າໝາຍຖືກຕິດຕາມກວດກາ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 108 ນະໂຍບາຍຕໍ່ຜູ້ມີຜົນງານ**

ຜູ້ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບ ການປົກປ້ອງ, ການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 109 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ຜູ້ລະເມີດກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

# ພາກທີ IX
# ບົດບັນຍັດສຸດທ້າຍ

**ມາດຕາ 110 ການຈັດຕັ້ງປະຕິບັດ**

ຄະນະປະຈຳສະພາແຫ່ງຊາດ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ອົງການລັດທີ່ກ່ຽວຂ້ອງ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 111 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 11 ມັງກອນ 2024 ພາຍຫຼັງ ປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 12/ສພຊ, ລົງວັນທີ 15 ພະຈິກ 2016.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ